ສະບາຍດີ

ເພື່ອວ່າບໍ່ຢາກໃຫ້ທ່ານຜູ່ອ່ານຜູ່ທີ່ຕິດໃຈໃນເລື້ອງນີ້ລໍຄອຍຖ້າຈົນເຫິງນານຈົນເກີນໄປ
ຂ້າພະເຈົ້າຈຶ່ງໄດ້ຂຽນພາກຕໍ່ໄປຊຶ່ງເປັນພາກສຸດທ້າຍຂອງນະວະນິຍາຍໃບໄມ້ສາມສາມສີ
ຫລືສາມລະດູນີ້ (ໃນພາສາອັງກິດ ເພິ່ນເອີ້ນກັນວ່າ Trilogy ຊຶ່ງກໍມີ ໃບໄມ້ຫລົ່ນ ໃບໄມ້ປົ່ງ
ແລະໃບໄມ້ບານ) ແລ້ວນະວະນິຍາຍຈະລົງເອີຍແນວໃດ
ກໍຂໍເຊີນທ່ານຕິດຕາມໄດ້ໃນຂ້າງລຸ່ມນີ້ກໍແລ້ວກັນ

ດ້ວຍຄວາມຮັກແພງ
ລາວເກົ່າ
ປ.ລ. ນະວະນິຍາຍເລື້ອງນີ້ມີດ້ວຍກັນ໑໐ຕອນ



*ລາວເກົ່າຂໍສເນີນະວະນິຍາຍຂອງຄວາມຮັກອັນບໍຣິສຸດ*
*ອັນຍິ່ງໃຫຍ່ແລະອັນເປັນອັມມະຕະຂອງຫນຸ່ມສາວທີ່ຮູ້ຈັກຄໍາວ່າ " ໃຫ້" ແລະຊີວິດທີ່ດີງາມ*
*ທີ່ຢູ່ເຫນືອກ່ວາຜົນປໂຍດຂອງຕົນເປັນທີ່ຕັ້ງ*



## ຕອນທີ໑: ບາດກ້າວທີ່ຫຍັບອອກໄປແຕ່ລະກ້າວຂອງນາງ

ອິສຣະຢືນແນມເບິ່ງວຽງປະພາທີ່ກ້າວຂາອອກໄປຢ່າງຄົນທີ່ຍັງຕົກຢູ່ໃນຄວາມຝັນຮ້າຍ ເຂົາຮອດບໍ່ຮູ້ສຶກຕົວເມື່ອຄົນທີ່ຕົນເຄີຍຮັກເຄີຍບູຊາບັນຈົງເອົາມືຂອງເຂົາໄປວາງໄວ້ແນບມືຂອງວອນວິໄລ ຈົນກະທັ່ງວ່າວຽງປະພາປິ່ນຫລັງຈາກເຂົາໄປພຸ້ນ ເຂົາຈຶ່ງຮູ້ຕົວວ່ານີ້ບໍ່ແມ່ນຄວາມຝັນທີ່ພໍຕື່ນມືນຕາກໍມະລາຍຫາຍໄປ ນັບແຕ່ນີ້ຕໍ່ໄປ ຈະບໍ່ມີອີກແລ້ວຍອດຍິງທີ່ເປັນຄວາມຫວັງແລະກຳລັງໃຈໃຫ້ຕລອດເວລາທີ່ເຂົາຍັງຢູ່ເມືອງນອກນັ້ນ ຄວາມຝັນອັນລົມໆແລ້ງໆທີ່ວ່າ ວັນໃດວັນນຶ່ງເຮົາສອງອາດຈະວຽນມາພົບກັນແລະຮັກກັນຢ່າງທີ່ບໍ່ມີວັນຈະພາກຈາກກັນ ໄດ້ຖືກທຳລາຍລົງຈົນຫມົດສິ້ນ ນີ້ຫາກວ່າເປັນຄືເມື່ອກ່ອນຕອນທີ່ເຂົາຍັງບໍ່ທັນມີພາລະເກີນກ່ວາທີ່ເຂົາຈະແກ້ອອກໄດ້ ໂດຍທີ່ບໍ່ເປັນການບາດມາງນ້ຳໃຈວອນວິໄລຍິງຄົນໃຫມ່ຈົນເກີນໄປ ເຂົາຄົງຈະໄປອ້ອນວອນຂຸເຂົ່າລົງຢູ່ຕໍ່ຫນ້າວຽງປະພາທີ່ກຳລັງຈາກໄປນັ້ນໃຫ້ໄດ້

ຜູ່ທີ່ມາສົ່ງວຽງປະພາແລະແມ່ຂອງນາງຕ່າງກໍແນມມາເບິ່ງເຂົາເປັນຈຸດດຽວກັນ ທຸກຄົນຕ່າງກໍຮູ້ວ່າວຽງປະພາກັບມາຢ້ຽມເມືອງໃນຄັ້ງນີ້ກໍເພາະມີເຂົາເປັນເຫດ ແລະເມື່ອເຂົາມາເປັນແນວນີ້ ຊຶ່ງກໍຄືມີວອນວິໄລຢູ່ຄຽງຂ້າງ ລະຄອນຮັກລະຄອນເສົ້າຈຶ່ງເປັນທີ່ສົນໃຈແກ່ທຸກໆຄົນ ອິສຣະຢາກຈະຮ້ອງປ່າວປະກາດໃຫ້ໂລກຮູ້ວ່າ ເຂົາພຽງແຕ່ໃຫ້ຄວາມສົງສານແລະຄວາມເປັນເພື່ອນທີ່ດີແກ່ວອນວິໄລເທົ່ານັ້ນ ສ່ວນວ່າຄວາມຮັກນັ້ນ ເຂົາຄົງຈະມີໃຫ້ໄດ້ແກ່ວຽງປະພາຜູ່ດຽວ

ອີສຣະແນມນຳຫລັງຂອງວຽງປະພາຢ່າງນິ່ງຄົນທີ່ໃກ້ຈະຈົມນ້ຳຕາຍ
ບາດກ້າວແຕ່ລະກ້າວຂອງນາງທີ່ກ້າວອອກໄປຈາກເຂົານັ້ນ
ເຫມືອນນຶ່ງຫນ້ານ້ຳທີ່ຄ່ອຍໆຈະຈົມເຂົາໃຫ້ຫາຍຫລັບໄປກັບສາຍນະທີ ຍິ່ງເມື່ອມາຕະຫນັກວ່າ
ນາງນັ້ນຮັກເຂົາຢ່າງຫມັ້ນຄົງແລະກໍຢ່າງຫາອັນປຽບບໍ່ໄດ້ ເຂົາກໍເຖິງກັບສະອຶກໄປໃນຫົວອົກ
ພາບເກົ່າໆທີ່ມີນາງເຄີຍຢູ່ຄຽງຂ້າງ ເຄີຍເປັນກຳລັງໃຈແລະມອບຄວາມຫວັງໃຫ້
ທະຍອຍຫລັ່ງໄຫລກັນເຂົ້າມາໃນມະໂນຈິດຂອງເຂົາ ເຫມືອນນຶ່ງຈະຢ້ຳເຕືອນເຂົາວ່າ
ເຂົາກຳລັງຈະປະໃຫ້ສິ່ງທີ່ມີຄ່າລ້ຳໃນຊີວິດລ່ອງລອຍໄປຢ່າງບໍ່ມີວັນຫວນຢ່ອນຄືນມາອີກ



ນີ້ລະນໍເພິ່ນວ່າ
ກ່ວາຈະຮູ້ໄດ້ຊຶ່ງຄຸນຄ່າອັນແທ້ຈິງຂອງສິ່ງໃດນຶ່ງ ຄົນໃດນຶ່ງ
ກໍເມື່ອສິ່ງນັ້ນໄດ້ ຄົນນັ້ນໄດ້ຫລຸດຫາຍໄປຈາກຕົນເສັຽແລ້ວ
ວຽງປະພາແມ່ຍອດເທບທິດາທີ່ສວັນສົ່ງໃຫ້ມາເກີດເພື່ອໂລ
ກນີ້ຈະໄດ້ແຈ່ມໃສ ເພື່ອຜູ່ຄົນຈະໄດ້ຍິ້ມຣື່ນ
ແລະກໍເພື່ອຄວາມຮັກຄວາມດີງາມຈະໄດ້ຈີຣັງຢືນຢູ່ຄູ່ຟ້າ
ແລ້ວນາງໄດ້ຮັບຫຍັງຕອບຄືນຈາກເຂົາ
ຜູ່ຊຶ່ງວ່າມີອຸດົມການອັນຫນັກແຫນ້ນດັ່ງຂຸນເຂົາທີ່ຕະຫງ່ານ
ຜູ່ຊຶ່ງວ່າມີຄວາມຮັກອັນແສນຈະຢັ່ງເຖິງໄດ້ດັ່ງມະຫາສມຸດ
ທີ່ກ້ວາງໃຫຍ່ ແລະຜູ່ຊຶ່ງວ່າ

ຮັກເຈົ້າ ເທົ່າຊີວາ
ແມ້ນວັນເວລາ ຈະລ່ວງລັບ
ແມ້ນດວງໃຈ ຈະແຕກດັບ
ຮັກນີ້ ບໍ່ມີວັນຕາຍ

ອີສຣະແນມນຳບາດກ້າວຂອງວຽງປະພາທີ່ຫລັບຫາຍໄປກັບປະຕູຂຶ້ນເຄື່ອງບິນນັ້ນ
ພາບໃບຫນ້າທີ່ຊົງຄວາມຍິ້ມແຍ້ມແຕ່ຊ້ອນໄປດ້ວຍຄວາມເສົ້າສ້ອຍຂອງນາງໂດຍສະເພາະກໍແມ່ນ

ຈາກແວວຕາທີ່ບົ່ງບອກເຖິງຫລາຍສິ່ງທີ່ຄົນທີ່ມີຄວາມຮັກເທົ່ານັ້ນຈະເຂົ້າໃຈໄດ້
ພາບດັ່ງກ່າວອີສຣະຕະຫນັກວ່າ
ມັນຈະບໍ່ພຽງຕິດຕາມແລະຫລອກຫລອນດວງໃຈດວງນີ້ໄປແຕ່ພຽງວັນນີ້ ເວລານາທີນີ້
ແຕ່ມັນຄົງຈະຕິດຕາມເຂົາໄປຈົນຕາບເທົ່າລົມຫາຍໃຈບາດສຸດທ້າຍຂອງເຂົາ

.....

ໂອ້ຢາດເພັດ ໃຜລະຈະຫານເອື້ອມມືຄ້ວາ
ເຈົ້າຊ່າງຢູ່ສູງເຫລືອເກີນ ເຖິງຈະລອຍລົງມາຕ່ຳ
ຕົວຂ້ອຍກໍຍັງເອື້ອມບໍ່ເຖິງ
ແຕ່ໃຈຂ້ອຍກໍຝັນໃຝ່ເສັຽແລ້ວ
ຂ້ອຍຈະຕໍ່ມືຄ້ວາໃຫ້ສູງ ສູງເທົ່າກັບເຈົ້າ

ຢາດເອີຍຢາດເພັດ
ປະກາຍແຫ່ງຄວາມສົດໃສຂອງເຈົ້າ
ສວ່າງຈ້າໃນດວງໃຈຂ້ອຍ ພາຂ້ອຍໄປທຸກຫົນແຫ່ງ
ໃນຄວາມຮັກ ອົບອຸ່ນ ແລະ ເປັນສຸກ
ແລະ ແມ້ນໃນຄວາມມືດມົນ
ຈະຫາຍິ່ງໃດມາທຽບເທົ່າກັບຄຸນຄ່າຂອງເຈົ້າ ບໍ່ມີເລີຍ

.....



## ๘. ນຶ່ງປີໄດ້ຜ່ານພົ້ນ

ມື້ນີ້ ວອນວິໄລບໍ່ໄດ້ໄປເຮັດວຽກຢູ່ຮ້ານກິນດື່ມ ນາງເອົາເສື້ອຜ້າທີ່ສະສົມມາໄດ້ເປັນທິດໆມາຊັກ ຕາມທັມມະດາຖ້າຈະເອົາໄປໃຫ້ຮ້ານຊັກລີດກໍໄດ້ຢູ່ ເພາະນາງເອງກໍມີເງິນເຫລືອພໍໃຊ້ພໍຈ່າຍ ແນວວ່າການເຮັດວຽກເປັນສາວເສີຟນັ້ນ ບາງຄັ້ງໂຊກດີກໍມີຄົນທິພໃຫ້ຢ່າງງາມໆ ໂດຍສະເພາະກໍແມ່ນເຈົ້າຫນຸ່ມທັງຫລາຍທີ່ຫວັງຈະຈີບເອົານາງໂດຍໃຊ້ເງິນເປັນເຄື່ອງລອງລໍ້ ບາງຄົນຫັ້ນກໍຍິ່ງໄປໄກ ຫວັງຈະເອົານາງໄປນອນຄ້າງຄືນນໍາອີກດ້ວຍ ຊຶ່ງຖ້າເປັນກໍຣະນີດັ່ງກ່າວ ນາງຢືນຢັນບໍ່ຍອມເອົາເງິນທີ່ຢັດຢຽດມາໃຫ້ນັ້ນຈັກຫລຸ່ຍ
ມະນີເພື່ອນຄູ່ຫູນັ້ນບາງຄັ້ງຂີ້ຄ້ານຟັງເຈົ້າຫນຸ່ມທັງຫລາຍຊູຊີຢາກໃຫ້ນາງຊ່ອຍເວົ້າຈາໃຫ້ອີກຕໍ່ນຶ່ງ ກໍເວົ້າຂຶ້ນຢ່າງບໍ່ທັນໄດ້ຄິດໄຕ່ຕອງວ່າ ກະໄປກັບເຂົາເຈົ້ານໍາຈັກເທື່ອແດ່
ຊຶ່ງນັ້ນມະນີຫມາຍຄວາມວ່າ
ຖ້າເພື່ອນຂອງຕົນພຽງແຕ່ໄປເຕັ້ນລໍາຫລືຂີ່ລົດຕາກລົມຊົມອາກາດກັບເຈົ້າຫນຸ່ມ
ເຈົ້າແກ່ກະເປົາຫນັກໆທັງຫລາຍຊື່ໆ ກໍບໍ່ຫ່ອນຊິເສັຽຫາຍຫຍັງ
ອັນເລື້ອງຕົກລົງປົງໃຈໃຫ້ຂຶ້ນຫ້ອງນໍານັ້ນ ມັນກໍເປັນອີກເລື້ອງນຶ່ງ ຈະມາບັງຄັບກັນບໍ່ໄດ້
ອີກຢ່າງມະນີກໍຮູ້ວ່າ ວອນວິໄລໄດ້ຟາກຝັງທຸກສິ່ງທຸກຢ່າງໄວ້ໃຫ້ແກ່ອິສຣະຄົນດຽວແລ້ວ
ເລື້ອງຈະໄປຄ້າງຄືນກັບຊາຍໃດນັ້ນຝັນໄປເຖີດ ວອນວິໄລເອງກໍເຝົ້າບອກເພື່ອນວ່າ
ຖ້າຈະເວົ້າເລື້ອງນີ້ແລ້ວ ຢ່າເສັຽແຮງລົມປາກເວົ້າຂຶ້ນມາເລີຍ ເພາະຄໍາຕອບກໍຄືຄໍາວ່າ “ບໍ່”
ຢ່າງເດັດຂາດຄໍານຶ່ງຄໍາດຽວເທົ່ານັ້ນ



ມະນີທັ້ນຄັນປາກຫລາຍເທື່ອຢາກຈະທັ່ງເຫຄວາມໃນໃຈຂອງຕົນອອກມາວ່າ
ໃຫ້ໂຕປັກໃຈໄປເຖິດກັບພໍ່ຄົນດີຂອງໂຕ ຈັກໜ້ອຍວຽງປະພາໂຜ່ໜ້າມາໃຫ້ເຫັນອີກ
ກໍເປັນຄົນທີ່ເມີ່ລອຍຢູ່ຄືເກົ່າທັ້ນແຫລະ ແນວບູຮານວ່າ ຖ່ານໄຟເກົ່າ ບໍ່ເປົ່າມັນກະລຸກ
ແລ້ວອັນເລື້ອງຕື້ນເຂີນຂອງສອງຄົນນີ້ ຈັກໃຜຈະລ່ວງຮູ້ແຈ້ງແທງຊອດໄດ້
ນອກນັ້ນມະນີຍັງກະຫຍິບບອກເພື່ອນວ່າ
ໂຕຈື່ບໍ່? ອັນມື້ໄປສົ່ງວຽງປະພານັ້ນ ອ້າຍອິສຣະຂອງໂຕນັ້ນແມ່ນສອງໜ່ວຍຕານັ້ນ
ແມ່ນມີໃຫ້ໄວ້ແກ່ໃຜ ບອກໄດ້ຢ່າງງ່າຍໆກໍແມ່ນວ່າ ບໍ່ແມ່ນໂຕກໍແລ້ວກັນ
ວອນວິໄລເອງກໍບໍ່ແມ່ນວ່າ ຈະບໍ່ສັງເກດເຖິງກິຣິຍາການສະແດງອອກຂອງອິສຣະທີ່ບາງຄັ້ງ
ນາງຢາກຈະວ່າມັນລົ້ນເຫລືອເກີນໄປໂພດ ແຕ່ນາງກໍເຝົ້າບອກຕົນເອງວ່າ
ຖ້າເປັນນາງຜູ່ຊື່ງຢູ່ໃນສະພາບເຊັ່ນເຂົາ ນາງກໍຄົງຈະປະພຶດຕົວໄດ້ດີກ່ວານີ້ເລີຍ



ວອນວິໄລຄິດມາເຖິງຕອນນີ້ແລ້ວກໍເປັນສີຫມົ່ນຫມອງໃຈເປັນວາດໃດວາດນຶ່ງ
ເສື້ອຜ້າຖືກບັນຈົງຊັກຈີນເກືອບວ່າໝົດທຸກໂຕແລ້ວ ນາງວ່າຈະໄປຖອກນ້ຳຊາມທີ່ກຳລັງໃຊ້ຢູ່ຖິ້ມ
ມືຂອງນາງກໍໄປສັມຜັດຕ້ອງເອົາກັບຜ້າພັນຄໍທີ່ອິສຣະຊື້ໃຫ້ເນື່ອງໃນວັນເກີດຂອງນາງທີ່ຜ່ານມາຂຶ້ນ
ມາທັນໃດ ພາບຂອງຊາຍຄົນຮັກບັນຈົງພາດຜ້າພັນຄໍໃຫ້ນາງຢ່າງແສນຈະຖນຸຖນອມ
ອັນເຕັມໄປດ້ວຍແສງຕາທີ່ອ່ອນໂຍນແລະຫວານຫວານນັ້ນ
ວອນວິໄລກໍຄ່ອຍຮູ້ຕົວຂຶ້ນມາຄືນຈາກອາລົມເສົ້າໆນັ້ນໄດ້ ອິສຣະ

ພໍ່ຍອດຊາຍໃນຝັນແລະໃນຄວາມເປັນຈິງຂອງນາງ ຕໍ່ແຕ່ນີ້ໄປ
ນາງຈະບໍ່ໃຫ້ຄວາມຄິດທີ່ຄອຍບັນທອນຄວາມໝັ້ນໃຈທີ່ນາງມີຕໍ່ເຂົາລົງໄດ້
ແລະອີກຢ່າງກໍແມ່ນວ່າ ບໍ່ແມ່ນວຽງປະພາເອງບໍ່ ທີ່ເອົາມືຂອງນາງວາງແນບກັບມືຂອງອິສຣະນັ້ນ
ເໝືອນນຶ່ງຈະບອກວ່າ ຕໍ່ແຕ່ນີ້ໄປ ຈະບໍ່ມີນາງມາກີດຂວາງຮັກຂອງສອງໜຸ່ມສາວນີ້ອີກເລີຍ
ວອນວິໄລລູບມືຂອງຕົນເອງໃນນໍ້າ ຄວາມອົບອຸ່ນຈາກອາຍມືຂອງຊາຍຄົນຮັກຍັງຄົງຊາບຊຶ້ງ
ແລະອຸ່ນແໜ້ນໃນດວງກະມົນຂອງນາງ ແມ້ນກະທັ່ງວັນນີ້ແລະເວລານາທີນີ້

ຂ້າງຝ່າຍອິສຣະ ເກືອບປີນຶ່ງທີ່ຜ່ານໄປໄດ້ຄາຍຄວາມຄິດຮອດຄິດເຖິງວຽງປະພາ
ໄປໄດ້ຈຳນວນນຶ່ງ ທັງນັ້ນທັງນີ້ອາດຈະເປັນຍ້ອນວ່າ ເຂົາໄດ້ຕະໜັກໃນສັນຍາລັກ
ທີ່ວຽງປະພາເອົາມືຂອງເຂົາໄປວາງໄວ້ແນບຊິດກັບວອນວິໄລນັ້ນ ເຂົາຮູ້ດີວ່າ
ວຽງປະພາເປັນຄົນທີ່ຖືໝັ້ນໃນວາຈາພຽງໃດ ຊຶ່ງເຖິງນາງຈະບໍ່ຍອມເວົ້າຫຍັງອອກມາໂດຍກົງໆ
ແຕ່ການກະທຳຂອງນາງໃນມື້ໄປສົ່ງນັ້ນ ກໍນັບໄດ້ວ່າເປັນວາຈາທີ່ເດັດຂາດຂອງນາງໄປໃນຕົວ
ເພື່ອເປັນການເຄົາລົບໃນຕົວຂອງຍິງຄົນທີ່ເຂົາຮັກເຂົາບູຊາ
ອິສຣະຈຶ່ງຕັດໃຈຂາດຄວາມສັມພັນກັບນາງດັ່ງເຊັ່ນເຄີຍ ແມ້ນວ່າຄັ້ງໃໝ່ນີ້
ເຂົາຈະຮູ້ເຂົ້າເຖິງຂົ້ວຫົວໃຈວ່າ ວຽງປະພານັ້ນຮັກເຂົາພຽງຜູ່ດຽວຕລອດມາ ແລະກໍອາດຈະ...
ເຂົາບໍ່ຢາກຕໍ່ເຕີມຄຳທ້າຍນັ້ນເພາະຫາກເປັນເຊັ່ນນີ້ ແລ້ວເຂົາຈະຍີ້ມໃຫ້ໂລກໄດ້ແນວໃດ
ໃນຂະນະທີ່ຍິງອີກຄົນນຶ່ງຕ້ອງມາລົງເອີຍແບບນັ້ນ



ເພື່ອວ່າເປັນການຕັດໃຈຈາກສິ່ງຕ່າງໆ ຈາກຄວາມຫລັງທີ່ມີແຕ່ຂົ່ມຂືນນີ້
ອິສຣະຈຶ່ງມອບກາຍແລະໃຈໃຫ້ແກ່ວຽກງານໂດຍຫວັງວ່າທາງຂັ້ນສູງຈະເຫັນໃນການອຸທິດຕົນເພື່ອ

ພາລະກິດສ້າງສາບ້ານເກີດເມືອງນອນດ້ວຍຄວາມຈິງຈັງແລະຈິງໃຈນີ້ ແລະເຂົາກໍຫວັງວ່າ ໃນວັນໃດວັນນຶ່ງອີກບໍ່ດົນຈົນເກີນລໍ ເຂົາຄົງໄດ້ມີໂອກາດເຮັດວຽກງານ ຕາມຄວາມຮູ້ຄວາມສາມາດທີ່ເຂົາມີ ແຕ່ກໍປະກົດວ່າທາງກົມກອງກັບບໍ່ເຫັນເຂົາຍາມເລື່ອນຊັ້ນ ຕໍາແຫນ່ງຫລືມີຍົກຍ້າຍພະນັກງານ ໄປກໍາຕໍາແຫນ່ງໃຫມ່ ບາງສຽງກໍວ່າ ເຂົາບໍ່ຕ້ອງການກິນຕໍາແຫນ່ງທີ່ຮັບຜິດຊອບສູງຊຶ່ງນັ້ນກໍຄືມີເງິນເດືອນເພີ້ມຂຶ້ນຕື່ມດອກ ເພາະເຂົາມີລາຍໄດ້ຈາກການເປັນຄູສອນຫນັງສືໃນໂຮງຮຽນເອກຊົນແລ້ວ ອີກຢ່າງເຂົາກໍບໍ່ມີຄອບຄົວເທື່ອ ຈະໃຫ້ໄວ້ໃຈນັ້ນຄືຈະຍາກ ແຕ່ສິ່ງທີ່ສໍາຄັນທີ່ສຸດກໍແມ່ນວ່າ ເຂົາເປັນຄົນນອກພັກນອກພວກ ເອົາເຂົາມາເປັນນາຍຫລືຮັບຜິດຊອບວຽກງານຂອງລັດ ທີ່ເຂົາບໍ່ໄດ້ມີສ່ວນຮ່ວມສ້າງມາແຕ່ຕົ້ນ ກໍຈະເປັນການຕີຕໍ່າແລດູແຄນຜູ່ທີ່ຄຸກຄີ ກັບການສ້າງລະບອບໃຫມ່ນີ້ມາແຕ່ຫົວທີ ເປັນອັນວ່າເມື່ອທົນຕໍ່ຄວາມອິສາຣິສຍາ ແລະຄວາມບໍ່ມີອຸດົມການອັນແທ້ຈິງຂອງຜູ່ຄົນ ທີ່ກ່ຽວຂ້ອງນັ້ນ ອິສຣະຈຶ່ງຂໍຍື່ນໃບລາອອກ ແລະໃນລະຍະທີ່ກໍາລັງວິ່ງເຕັ້ນຫາວຽກງານກັບເອກຊົນແລະອົງການຊ່ອຍເຫລືອຂອງຕ່າງປະເທດທີ່ ມາປະຈໍາຢູ່ເມືອງລາວນັ້ນ ເຂົາກໍໄປເປັນຄູອາສາຂອງໂຮງຮຽນທີ່ເຂົາເຄີຍຮຽນມາແຕ່ຍັງນ້ອຍໆນັ້ນ ອາດຈະເປັນຍ້ອນຄວາມຫ່ວງໃຍໃນອະນາຄົດຂອງເດັກນ້ອຍທີ່ບໍ່ຕ່າງຫຍັງກັບເຂົາເອງໃນເມື່ອສິບ ກ່ວາປີກ່ອນ ອິສຣະຈຶ່ງຕິດຕໍ່ຫາເພື່ອນຝູງທີ່ເຄີຍຮຽນຮ່ວມກັນຢູ່ປະເທດອັນມີບຸນມີເປັນຕົ້ນ ແລະກໍຈາກເງິນທອງຂອງເພື່ອນເກົ່າທີ່ຢາກຊ່ອຍເຫລືອຜູ່ດ້ອຍໂອກາດກ່ວາຕົນ ໃຫ້ໄດ້ມີຄວາມຫວັງໃນຊີວິດ ອິສຣະຈຶ່ງຊື້ປຶ້ມຊື້ສໍໃຫ້ນັກຮຽນແລະແມ້ນກະທັ່ງເສື້ອຜ້າ ໃຫ້ນັກຮຽນຜູ່ທຸກຈົນໄດ້ນຸ່ງຖື ພໍໃຫ້ໄດ້ເຫັນວ່າຕົນນັ້ນກໍເປັນນັກຮຽນ ບໍ່ແມ່ນເດັກນ້ອຍຂໍທານນຸ່ງເສື້ອຜ້າຂາດເກົ່າແລະມູມແມມ



ຈາກກິຈກັມທີ່ຄິດວ່າພໍຊ່ອຍບັນເທົາຄວາມຂາດເຂີນ ມັນກໍມີກໍາລັງແຮງໄປໃນຕົວຂອງມັນເອງ ບຸນມີຜູ່ຊຶ່ງມີໂອກາດໄດ້ມາສັມຜັດກັບຄວາມເປັນຈິງຂອງບ້ານເກີດເມືອງນອນໃນຫລາຍຄັ້ງ ເພາະຕ້ອງໄດ້ທຽວມາຢາມບ້ານກັບເມັຽ ບໍ່ວ່າໂອກາດນ້ອງເມັຽຈະກິນດອງເອີຍ

ຫລືບໍ່ຊັ້ນກະເຮັດບຸນຕ່າງໆທີ່ທາງຄອບຄົວເມັ່ງເຮັດຂື້ນເອີຍ ເຂົາຈຶ່ງເກີດມີແນວຄິດວ່າ
ເປັນຫຍັງອິສຣະຜູ່ຊຶ່ງເປັນທີ່ຕິດແນບກັບຊີວິດຕົວຈິງກ່ວາເຂົາບໍ່ປຸກກໍ່ໂຮງຮຽນ
ທີ່ເຂົາສອນຢູ່ຂື້ນມາໃຫມ່ ເພາະໂຮງຮຽນຫລັງເກົ່ານັ້ນຮອດຍາມຝົນມາ
ນັກຮຽນຕ້ອງໄດ້ແຫຍ່ກັນຊົ້ນຝົນ ເພາະຫລັງຄາຮົ່ວເປັນປະຈຳ
ຫລືບໍ່ຊັ້ນກະຝາເປັນປອງໃຫ້ເມັດຝົນໄດ້ປີວເຂົ້າໃສ່
"ເຮົາກໍຄິດແນວຄືໂຕວ່າຄືກັນ ແຕ່ຈັກຈະໄປຫາທຶນຮອນຢູ່ໃສ
ລຳພັງເງິນເດືອນຄ່າສອນຈາກໂຮງຮຽນເອກຊົນກໍບໍ່ພໍເປັນກອບເປັນກຳເລີຍ"
ອິສຣະເວົ້າມາແລ້ວກໍທໍ້ໃຈ ເປັນຫຍັງບໍ້ານເມືອງເຮົາຈຶ່ງເປັນເຊັ່ນນີ້?
ເພາະຄົນຢ່າງເຂົາຜູ່ທີ່ໄດ້ຮັບການສຶກສາມາຢ່າງດີຮູ້ຢ່າງເຕັມອົກວ່າ
ບ້ານເມືອງນີ້ອຸດົມສົມບູນແລະຮັ່ງມີໄປດ້ວຍຊັບພະຍາກອນຕ່າງໆ
ເຫດທີ່ມັນບໍ່ໄປບໍ່ມານີ້ກໍເພາະຜູ່ມືຍາວ ສາວໄດ້ສາວເອົາ
ສ່ວນຜູ່ທີ່ເປັນກຳລັງບ້ານກຳລັງເມືອງແລະທີ່ເຂັ້ມແຂງເອົາຈິງເອົາຈັງກັບຖືກປັດເຊັ່ງ
ອອກຈາກຕຳແຫນ່ງການງານທີ່ພໍຈະຊີ້ເປັນຊີ້ຕາຍໃຫ້ແກ່ຄົນທັມມະດາສາມັນຊົນໄດ້



"ຢ່າໄປຄິດແນວນັ້ນເພື່ອນເຮົາ ແຕ່ກ່ອນໂຕເຄີຍເວົ້າສເມີມາວ່າ
ອັນບ້ານເມືອງນີ້ເປັນຂອງຄົນລາວເຮົາທຸກຄົນ
ເຮົາຄົນລາວຕ້ອງພາກັນສ້າງພາກັນແປງຢ່າໄດ້ຮູ້ທໍ້ແທ້
ແມ້ນຢູ່ວ່າເຮົາແລະອີກຫລາຍໆຄົນຈະບໍ່ໄດ້ຢູ່ເມືອງລາວອີກແລ້ວ
ເຮົາກໍຍັງເປັນລາວແລະກໍຮັກຫອມເມືອງລາວບໍ່ນ້ອຍໄປກ່ວາຄົນທີ່ຢູ່ກັບນີ້ເລີຍ"
ອິສຣະໄດ້ຍິນບຸນມີຜູ່ຊຶ່ງເຂົາບໍ່ເຄີຍແນ່ໃຈວ່າ
ຫມໍກໍຍັງມີໃຈຜູກພັນກັບບ່ອນຝັງສາຍແຮ່ບ່ອນແພ່ສາຍບືຂອງຫມໍເຫມືອນຕົນຢູ່ບໍ່?
ດັ່ງນັ້ນເມື່ອໄດ້ຍິນດັ່ງວ່າ ອິສຣະເຖິງກັບຕົບເຂົ່າເພື່ອນ ເຫມືອນນຶ່ງຈະວ່າ

ບໍ່ເສັງແຮງທີ່ເຮົາມີເພື່ອນຄືໂຕ ແລະຫາກໂຕຈະຢືນຢູ່ຄຽງຂ້າງເຮົາ
ໂຮງຮຽນຫລັງໃຫມ່ຈະຕ້ອງມີວັນເປັນຈິງຂຶ້ນມາໃຫ້ໄດ້

ອິສຣະຄິດເຖິງຄຳເວົ້າອັນຫນັກແຫນ້ນຂອງບຸນມີແລ້ວ ກໍໄດ້ແຕ່ຫວັງວ່າມື້ໃດມື້ນຶ່ງ
ໂຮງຮຽນທີ່ສົມຊື່ເປັນໂຮງຮຽນ ບໍ່ວ່າທັງດ້ານວິຊາການທີ່ເຂົາມີໃຫ້ແຕ່ເຄົ້າໂຄ່ງ
ອັນຫມັ້ນຄົງໃນທາງດ້ານຮູປພັນອີກດ້ວຍ ເຂົາສອດສາຍຕາໄປເບິ່ງຕຶກອາຄານໂຮງຮຽນອີກຄັ້ງ
ກ່ອນທີ່ຈະພາຕົນເອງຍ່າງຕາມຫລັງນັກຮຽນທີ່ທະຍອຍກັນເຂົ້າສູ່ຫ້ອງຮຽນຢ່າງພຶດພື້ນ

## ໖. ຫລາຍຊີວິດ ຫລາຍເສັ້ນທາງ

ຫລັງຈາກກັບມາແຕ່ໄປຮັບວອນວິໄລຈາກຮ້ານກິນດື່ມແລ້ວ ອິສຣະກໍຂໍຕົວກັບບ້ານ
ເຂົາບອກນາງແຕ່ວ່າ ມື້ອື່ນເຊົ້ານີ້ ເຂົາຈະເຂົ້າໄປສັມພາດເປັນວິສວະກອນໃຫ້ແກ່ອົງການ
ຊ່ອຍເຫລືອຂອງຕ່າງປະເທດ ທີ່ມາປະຈຳການຢູ່ເມືອງລາວ ນາງເອງສຸດແສນດີໃຈນຳທີ່ເປັນທີ່ສຸດ
ເພາະເຂົາກໍຈະມີໂອກາດໄດ້ໃຊ້ຄວາມຮູ້ຄວາມສາມາດອັນແທ້ຈິງຈັກເທື່ອ
ຊຶ່ງນັ້ນຄົງຈະເຮັດໃຫ້ເຂົາມີຄວາມສຸກ ບໍ່ຕ້ອງພຽງພະວາພະວົນກັບການໃຊ້ຈ່າຍ
ແຕ່ຍັງກັບຄວາມບໍ່ແນ່ນອນໃນຊີວິດຄວາມເປັນໄປໃນດິນແດນທີ່ເຖິງຈະເປັນບ້ານຂອງຕົນ
ກໍເຫມືອນເປັນພຽງຖິ່ນຖານທີ່ເຂົາເຈົ້າໃຫ້ເຊົ່າພັກພິງກາຍຊື່ໆ

ວອນວິໄລມີຫລາຍເທື່ອກໍຢາກຮູ້ວ່າ ຈັກຍັງອີກດົນປານໃດເຂົາຈຶ່ງຈະບອກຮັກກັບນາງ
ຢ່າງທີ່ຫນຸ່ມສາວເຂົາມີໃຫ້ກັນ ແມ້ນຢູ່ວ່າ ໃນທຸກການກະທຳຂອງເຂົານັ້ນລ້ວນບົ່ງບອກວ່າ
ນາງເປັນຄົນທີ່ສຳຄັນທີ່ສຸດໃນຊີວິດຂອງເຂົາ ຊຶ່ງຈະເວົ້າອີກຢ່າງກໍວ່າ
ບໍ່ວ່າສິ່ງໃດທີ່ນາງຕ້ອງການຫລືແມ້ນແຕ່ຄິດຢາກໃຫ້ເຂົາເຮັດຫາມາໃຫ້
ອິສຣະແມ່ນວ່າຜ່າດົງພົງໄພໃຫ້ນາງໄດ້ສເມີ ແຕ່ທັງຫມົດນີ້ມັນກໍບໍ່ຄືຄຳວ່າ "ຂ້ອຍຮັກເຈົ້າ"
ຫລືຖ້າບໍ່ມີຄຳວ່າ "ຮັກ" ກໍຂໍໃຫ້ໄດ້ຍິນວ່າ "ໃນຊົ່ວຊີວິດນີ້ ຂ້ອຍກໍບໍ່ອາດຂາດເຈົ້າໄປໄດ້"
ຍິ່ງເມື່ອມາໄດ້ຍິນເພງໄທ "ພຽງຄຳດຽວ" ທີ່ລູກຄ້າມັກໃຫ້ເປີດຂຶ້ນມາຍາມໃດ
ນາງກໍອົດທີ່ຢາກຈະໄດ້ຍິນຄຳດັ່ງກ່າວຊຶ່ງກໍຄືຄຳວ່າ "ຮັກ" ຈາກປາກຂອງອິສຣະທັງເທື່ອ

ມະນີເພື່ອນຄົນດີຂອງນາງຜູ່ທີ່ຮູ້ເລື້ອງລັບລົມຄົມໃນຂອງນາງກໍມັກຖາມຈູ້ຈີ້ເລື້ອຍໆວ່າ
"ເປັນແນວໃດ? ໄດ້ຍິນຫລືຍັງ ອັນມົນຂັງຝັງຈິດນັ້ນ?"
ແລະເມື່ອເຫັນເພື່ອນເສີຍເມີຍຢ່າງບໍ່ມີຄຳຕອບໃຫ້ ມະນີຈຶ່ງວ່າ

“ຫລີ້ນແບບນີ້ ມັນຕ້ອງແມ່ນເຮົາເປັນຜູ່ຈັດການຄັ້ນເອົາຄວາມຈິງຈາກປາກຄຳ
ຂອງອ້າຍອິສຣະແທ້ໆລະ”
“ໂຕຢ່າສູ່ໄປເຮັດແນວນັ້ນເປັນເດັດຂາດ ເຮົາຂໍນຳແທ້ໆ”
ວອນວິໄລອ້ອນວອນເພື່ອນເປັນສຽງອ່ອຍໆ ເພາະນາງຮູ້ອິສຣະດີວ່າ ສິ່ງໃດຄວນແລະບໍ່ຄວນ
ຄົນທີ່ມີອຸດົມການຢ່າງເຂົາ ອັນທຸກສິ່ງຢ່າງນັ້ນລ້ວນແລ້ວແຕ່ແມ່ນມາຈາກຈິດ
ແລະໃຈຂອງເຂົາໝົດ ຈະໃຫ້ສຽງໃດສຽງນຶ່ງຫລືແມ້ນກະທັ່ງຫລາຍສຽງບໍ່ເຫັນພ້ອມນຳເຂົາ
ຫາກວ່າເຂົາຕັ້ງໝັ້ນປັກໃຈລົງໄປແລ້ວ ຟ້າແລະດິນກໍບໍ່ອາດຈະມາຂວາງກັ້ນໄດ້
ແລະເມື່ອມະນີເຫັນວ່າ ເພື່ອນຂອງຕົວນັ້ນຂໍນຳປານວ່າຂໍນຳຊີວິດຂອງຕົວເອງ
ນາງຈຶ່ງຍອມເລີກລາຄວາມຄິດດັ່ງກ່າວໄປ ແຕ່ປານນັ້ນກໍຍັງບໍ່ລືມເວົ້າວ່າ
“ຫລີ້ນລໍຖ້າໄປເລື້ອຍໆນີ້ລະ ຈັກໜ້ອຍກະເປັນເຖົ້າຄ້າງຄົກຂຶ້ນມາ
ຢ່າວ່າບໍ່ບອກເຕືອນກໍແລ້ວກັນ”



ວອນວິໄລຄິດມາຮອດນີ້ແລ້ວ
ກໍໄດ້ແຕ່ຖອນຫາຍໃຈໄປກັບຫລັງສົ້ນອິສຣະທີ່ກຳລັງຂີ່ລົດຈັກຜ່ານປະຕູຮົ້ວອອກໄປ
ບາດວ່ານາງກັບໄປບ້ານຢ້ຽມຢາມພໍ່ແມ່ໃນອີກບໍ່ດົນນີ້
ຈັກພວກເພິ່ນຊິເຂັ່ນຄຽ້ນນາງຈັ່ງໃດກ່ຽວກັບເລື້ອງການມີຄູ່ມີຄອງ ພວກເພິ່ນມັກເວົ້າວ່າ
ຢາກໃຫ້ນາງເປັນຝັ່ງເປັນຝາຈັກເທື່ອ ເພາະພວກເພິ່ນກໍເຖົ້າແກ່ແລ້ວ
ບໍ່ຮູ້ວ່າຈະໝົດລົມຫາຍຕາຍໃຈໄປມື້ໃດ

---

ຫລັງຈາກກັບມາຮອດທີ່ພັກຂອງຕົນແລ້ວ ອິສຣະກໍເຂົ້າຫາປຶ້ມສໍທີ່ຕົນຂຽນໄວ້ວ່າຈະຕອບຄຳຖາມ
ແນວໃດສຳຫລັບການສັມພາດມື້ອື່ນເຊົ້ານີ້ ເຂົາຮູ້ດີວ່າ ນີ້ເປັນວຽກງານທີ່ເຂົາຕ້ອງການທີ່ສຸດ
ເພາະບໍ່ພຽງແຕ່ມັນຈະຊ່ວຍບັນເທົາເລື້ອງເງິນຄຳທີ່ນັບມື້ນັບມີຫລາຍລາຍຈ່າຍຂຶ້ນ

ແຕ່ທີ່ສຳຄັນກໍແມ່ນວ່າ ຊີວິດທີ່ເປັນໄປແຕ່ລະວັນນີ້ ເຖິງຈະໄດ້ທຳຕົວໃຫ້ເປັນປໂຍດໃດນຶ່ງ
ມັນກໍຍັງຄືຮູ້ສຶກວ່າ ອັນການກັບມາບ້ານເກີດເມືອງນອນນີ້ເປັນຄວາມຄິດທີ່ຜິດ
ບໍ່ແມ່ນຍ້ອນຄົນທີ່ກ່ຽວຂ້ອງນຳບໍ່ເຫັນຄຸນຄ່າໃນການອຸທິດຕົວຂອງຕົນນັ້ນ
ແຕ່ຫາກວ່າຕົນບໍ່ໄດ້ໃຊ້ຄວາມຮູ້ຄວາມສາມາດທີ່ອົດສາຮ່ຳຮຽນເພື່ອປໂຍດໃດໆ
ຊຶ່ງນັ້ນກໍເທົ່າກັບວ່າ ມີຄວາມຮູ້ຄວາມສາມາດກໍຄືບໍ່ມີເອົາຊື່ໆ ແລ້ວຖ້າເປັນເຊັ່ນດັ່ງວ່າ
ຈະໃຫ້ເຂົາມີຫນ້າຢູ່ໄປວັນໆໄດ້ຢ່າງໃດກັນ?

ແລະໃນທ່າມກາງການຝຶກຊ້ອມການສັມພາດນັ້ນ
ໃນບາງຄັ້ງຄາວເຂົາກໍອົດທີ່ຈະຕຳຫນິໃຫ້ຕົນເອງທີ່ທຳຕົວເຫມືອນດັ່ງຫຸ່ນຍົນຕໍ່ກັບວອນວິໄລ
ຜູ່ເຂົາສຸດແສນຈະຖນຸຖນອມດຸດດັ່ງດວງຕາສອງຫນ່ວຍຂອງເຂົານີ້ ບອກຢ່າງກົງໄປກົງມາວ່າ
ເຂົານີ້ສົງສານນາງຢ່າງສຸດຊຶ້ງຈົນອາດຈະເອີ້ນໄດ້ວ່າ ນັ້ນຄືຄວາມຮັກ
ຫລືບໍ່ເກີດຂອງຄວາມຮັກອັນມີຊີວິດຮ່ວມນັ້ນເອງ ອິສຣະບອກກັບຕົວເອງວ່າ
ໃຫ້ເລື້ອງວຽກງານຜ່ານໄປ ໃຫ້ເລື້ອງໂຮງຮຽນໄດ້ເປັນຮູບເປັນຮ່າງຂຶ້ນມາ
ແລະກໍໃຫ້ເຂົາໄດ້ມີໂອກາດຕັດສິນໃຈວ່າ ຈະເດີນທາງໄປໃນເສັ້ນໃດກັນແທ້ກ່ອນ
ແລ້ວເຂົາຈະບອກກັບວອນວິໄລເອງວ່າ
ອັນຊີວິດນີ້ເຂົາພ້ອມທີ່ຈະວາງລົງແທບເທົ້າຂອງນາງຫລືບໍ່?

ແລະນະອີກມຸມນຶ່ງຂອງໂລກໃບກົມຫນ່ວຍນີ້ ວຽງປະພາເລີ້ມພະຍາຍາມເຮັດໃຈໄດ້ວ່າ
ເມື່ອນາງບໍ່ອາດມີອິສຣະເປັນເຈົ້າຜູ່ຄອງຫົວໃຈຄືດັ່ງແຕ່ກ່ອນ ນາງກໍຍັງຄົງທົນຢູ່ໄດ້
ນາງຍັງໄປລ້າໄປການ ຍັງຍິ້ມຫົວແລະຍັງມີຄວາມຫວັງໃນຊີວິດທີ່ຢ່າງຫນ້ອຍແມ່ແລະນ້ອງຊາຍ
ຈະເປັນຜູ່ຮ່ວມສຸກຮ່ວມທຸກນຳນັ້ນ ແຕ່ບາງຄັ້ງນາງກໍບໍ່ປະຕິເສດໄດ້ວ່າ
ອັນຮອຍແຜທີ່ອິສຣະປະຝັງໄວ້ໃຫ້ນັ້ນ ມັນຄົງຈະບໍ່ມີວັນຮູ້ຈືດຈາງແລະຫາຍສາບສູນ
ໄປຈາກດວງໃຈຂອງນາງໄດ້ ເວົ້າງ່າຍໆກໍແມ່ນວ່າ ຄວາມຮັກທີ່ນາງເຄີຍມີໄວ້ໃຫ້ອິສຣະນັ້ນ
ຈະຍັງຄົງຊ່ອນເຮັ້ນແລະຈະຍັງຄົງເປັນອັມມະຕະຢູ່ໃນດວງຮືໄທຂອງນາງຕຣາບເທົ່າໃດໆ

ແຈຣິຜູ່ຊຶ່ງຢືນຢັນຢາກຈະຂໍແຕ່ງງານກັບນາງໃຫ້ໄດ້ ເພາະເຂົາທົນລໍບໍ່ໄຫວອີກແລ້ວ
ວຽງປະພາກໍໄດ້ບອກເຂົາໄປວ່າ ນາງຍັງບໍ່ພ້ອມ ຫາກວ່າເຂົາລໍໄດ້ກໍລໍໄປ
ສ່ວນທີ່ວ່າວັນເວລານັ້ນປານໃດຈະມາເຖິງ ນາງໃຫ້ຄຳຕອບບໍ່ໄດ້ ນອກນັ້ນນາງຍັງບອກໄປອີກວ່າ
ມັນຈະເປັນການດີທີ່ເຂົາຄວນຈະໄປຫາຍິງອື່ນທີ່ເຫມາະສົມກັບເຂົາ
ເພາະສິ່ງທີ່ເຂົາຕ້ອງການຈາກນາງນັ້ນ ນາງໃຫ້ເຂົາບໍ່ໄດ້ ນາງຈື່ໄດ້ວ່າ

ແຈຣີເປັນມະໂຫມະທັນຮ້າຍຂື້ນມາວ່າ ເຂົາມາເສັຽເວລາທີ່ມີຄ່າກັບນາງເສັຽຖີ້ມລ້າ ແລະຫາກນາງຈະຖືຕົວວ່າ ນາງນັ້ນປະເສີດເລີດລ້ຳ ເຂົາກໍ່ຢາກຈະເຫັນ ອັນຍອດຊາຍຂອງນາງນັ້ນມັນຈະດີລື່ນເຂົາປານໃດ?

ວຽງປະພາຢາກຈະບອກແຈຣີໄປວ່າ ອັນຄວາມຮັກນີ້ມັນບັງຄັບກັນບໍ່ໄດ້ ອີກຢ່າງນາງກໍໄດ້ຮຽນຮູ້ວ່າ ຖ້າຫາກຈະຢືນຢັດຢູ່ກັບໂລກທີ່ແສນຈະປວນເປນີ້ ນາງຈະຕ້ອງເຂັ້ມແຂງ ການທີ່ຈະໃຫ້ແຈຣີມາເປັນມືປືນຄອຍຄຸ້ມນາງຕລອດເວລານັ້ນ ນາງຮັບບໍ່ໄດ້ອີກຕໍ່ໄປ ເພາະນັ້ນບໍ່ແມ່ນຄວາມຮັກແຕ່ຫາກແມ່ນການຖືຕົວເປັນເຈົ້າຂອງ ຊຶ່ງຄົນໆນຶ່ງບໍ່ຄວນມີໄວ້ໃຫ້ແກ່ຄົນທີ່ຕົນຮັກເລີຍ ໃນທັສນະຂອງນາງນີ້ ຄວາມຮັກຄືການເສັຽສລະ ບໍ່ແມ່ນການກອບໂກຍ ຊຶ່ງຫາກນີ້ແຈຣີຮັບບໍ່ໄດ້ ນາງກໍບໍ່ຄິດທີ່ຈະມອບຊີວິດທີ່ມີຄ່ານີ້ໃຫ້ເຂົາ ແມ້ນວ່າຈະເປັນພຽງທາງດ້ານຮ່າງກາຍສິ່ງດຽວກໍຕາມ

ວຽງປະພາຫລຽວອອກໄປຂ້າງນອກຈາກຫ້ອງການທີ່ນາງນັ່ງຢູ່ ໃນຕາຂອງນາງນັ້ນເຕັມໄປດ້ວຍຄວາມຫນັກແຫນ້ນ ອັນບໍ່ຕ່າງຫຍັງວັນກ່ອນທີ່ອິສຣະຍັງບໍ່ເຂົ້າມາໃນຊີວິດຂອງນາງ ແມ້ນວ່າດວງຕາຈະສໍ່ແວວຂອງຄວາມເສົ້າປະປົນຢູ່ ຜູ່ຄົນທີ່ເຫັນແວວຕານັ້ນ ຕ່າງກໍຕະຫນັກດີວ່າ ວຽງປະພາຄືຄົນໃຫມ່ທີ່ຈະບໍ່ຍອມໃຫ້ໃຜຊີ້ແລະບົ່ງການຫົວໃຈຂອງນາງໄດ້ອີກຕໍ່ໄປ



## ໔. ວອນວິໄລເມືອຢາມພໍ່ແມ່

ດ້ວຍວ່າຕັ້ງແຕ່ມາຫາຢູ່ຫາກິນຢູ່ວຽງຈັນໄດ້ຫລາຍປີແລ້ວ ນາງກໍບໍ່ເຄີຍເມືອຢາມພໍ່ແມ່ທີ່ເມືອງໂພນໂຮງຈັກເທື່ອ ດັ່ງນັ້ນເມື່ອລາວຽກງານໄດ້ແລະກໍມີເງິນເປັນກ້ອນໄປຕອບບຸນແທນຄຸນຜູ່ບັງເກີດເກົ້າທັງສອງແລ້ວ ວອນວິໄລກໍເມືອຢາມບ້ານກັບນ້ອງສາວ ຊຶ່ງນີ້ເປັນຂ່າວໃຫຍ່ສຳຫລັບຜູ່ຄົນໃນແຖວນັ້ນ ຍ້ອນວ່າຊື່ສຽງລຽງນາມທີ່ວ່າຄອບຄົວນີ້ມີລູກສາວງາມຈະກັບໄປບ້ານທັງເທື່ອຕັ້ງສອງຄົນບາດດຽວ ຫນຸ່ມໃຫຍ່ນ້ອຍທັງຫລາຍທີ່ທັງເຄີຍເຫັນສອງສາວນີ້ມາກ່ອນຫລືທີ່ບໍ່ເຄີຍເຫັນມາເລີຍແຕ່ຫາກໄດ້ ຍິນແຕ່ສຽງເລົ່າລືຈຶ່ງມາຊ່ອຍຈັດງານຮັບຕ້ອນພວກນາງທັງສອງກັນເສັງໃຫຍ່ໂຕມະໂຫຣານເລີຍ

ວອນວິໄລຜູ່ຊຶ່ງບໍ່ມີຫົວໃຈໃຫ້ໃຜອື່ນອີກແລ້ວນອກຈາກອິສຣະຄົນດຽວ ເຫັນຊາຍໃດກໍແລ້ວໆໄປແຕ່ກໍຢ່າງວ່າ ຍິ່ງນາງທຳຕົວບໍ່ສົນ ພວກຜູ່ຊາຍກໍແຮ່ງຢາກຈະຊະນະໃຈນາງໃຫ້ໄດ້ເບິ່ງເຂົາເຈົ້າລຽງຫນ້າກັນເຂົ້າມາຫາປານວ່າມາທຽວບຸນວັດກໍບໍ່ປານ ມີຫມໍນຶ່ງອາດຈະເມົາແດ່ຫລືອາດຈະກິນເຫລົ້າເຂົ້າເພື່ອໃຫ້ຫາຍປະຫມ່າຕໍ່ຫນ້າຄົນທີ່ຕິດຕາຕ້ອງໃຈ
ຫມໍກໍເວົ້າໄປນຳແລະມືກໍເຖິງໄປນຳຄືກັນ
ຂະນະທີ່ວອນວິໄລກຳລັງປັດເຊັ່ງມືທີ່ສຸ້ມສ້ອຍຫວັງກຳໄຣເລັກກຳໄຣນ້ອຍນັ້ນ
ກໍມີສຽງກ້ອງກັງວານດັງຂຶ້ນຂ້າງຫນ້າ
ຫມໍນັ້ນເຖິງກັບຫນ້າຫຣ່າເມື່ອມາເຫັນເຈົ້າຂອງສຽງນັ້ນເຂົ້າຢ່າງຈັງໆ
“ຂະນ້ອຍຂໍໂທດຫລາຍໆ ບໍ່ຮູ້ເຫລົ້າທີ່ກິນເຂົ້າບໍ່ພໍເທົ່າໃດຈອກ
ຈະເຮັດໃຫ້ຂະນ້ອຍບໍ່ຮູ້ສຶກຕົວແນວນີ້”
ຫມໍທັງເວົ້າທັງສັ່ນເພາະຜູ່ທີ່ຢືນຕໍ່ຫນ້າມີອິງຄະລັກທີ່ຖືປືນມາພ້ອມ
“ອອກໄປຈາກບ່ອນໄວໆ ແລະຢ່າສູ່ກັບມາໃຫ້ເຫັນຫນ້າອີກ” ສຽງຄຳຣາມດັງຂຶ້ນອີກ
ແລະບໍ່ທັນທີ່ສຽງນັ້ນຈະຈາງຫາຍໄປ ເຈົ້າຫມໍນັ້ນກໍຫອບແລ່ນປານຖືກຫມາຫວໍ້ໄລ່ກັດກໍບໍ່ປານ

“ຂໍໂທດນ້ອງສາວ ຖ້າອ້າຍມານີ້ແຕ່ດົນ ເລື້ອງແບບນີ້ຈະຕ້ອງບໍ່ເກີດຂຶ້ນ”
ຊາຍຫນຸ່ມໃຫຍ່ຄົນນັ້ນຊຶ່ງກໍຄືຈະບໍ່ຫລຸດລື່ນກັບອະຍຸນ້າບ່າວຄົນກາງຂອງນາງກ່າວຂຶ້ນ
“ຂະນ້ອຍຕ້ອງຂໍຂອບໃຈທີ່ທ່ານມາຊ່ອຍໄດ້ທັນ” ນາງຮູ້ໂດຍສັນຊາດສະຍານວ່າເຂົາຜູ່ນີ້ຕ້ອງເປັນຜູ່ໃຫຍ່ໄມ້ໂຕໃນເມືອງນີ້ແນ່ນອນ ສອງສາມປີທີ່ຈາກໄປ ເມືອງທີ່ນາງເຄີຍຢູ່ຕ່າງກໍປ່ຽນແປງໄປຫມົດ ມັນຊ່າງມີນ້ອຍຄົນທີ່ນາງຈະພໍຈື່ຈຳແລະຮຽກຂານຊື່ໄດ້

ໃນຂະນະທີ່ມີຄວາມວຸ່ນວາຍເພາະສຽງດັ່ງນັ້ນເປັນເຫດ ພໍ່ຂອງນາງກໍພວດພາດເຂົ້າມາ ແລະເມື່ອເຫັນຜູ່ເປັນໃຫຍ່ຂອງເມືອງມາຮອດເຮືອນຮອດຊານຕືນ ພໍ່ຈຶ່ງກຸລີກຸຈໍໄປຫາເຫລົ້າປາ ອາຫານຂອງແກ້ມມາໃຫ້ ພ້ອມບໍ່ລືມສັ່ງລູກສາວຄົນກົກໃຫ້ດູແລເບິ່ງແຍງ ຜູ່ບັງຄັບບັນຊາກອງທະຫານປະຈໍາເມືອງອີກດ້ວຍ



“ອ້າຍກໍໄດ້ແຕ່ຍິນເຂົາວ່າ ລູກສາວຂອງລຸງທອດມີແຕ່ຄົນງາມໆ ບາດໄດ້ມາເຫັນຫນ້າຄັກໆ ຈັ່ງຫາກໍຮູ້ວ່າ ຍິ່ງກ່ວາຄໍາເລົ່າລືອີຫລີ” ເພິ່ນຜູ່ມາໃຫມ່ທັງຍິ້ມໃຫ້ ທັງຫວັງທີ່ຈະໄດ້ຍິນຄໍາສໍພໍຕອບ “ຂອບໃຈນໍາທ່ານຫລາຍໆທີ່ຍໍມາ ຂະນ້ອຍເປັນພຽງສາວບ້ານນອກໄປຫາກິນຢູ່ໃນເມືອງ ກັບມາກໍຍັງຄົງເປັນສາວບ້ານນອກຢູ່ຄືເກົ່າ” ນາງຕອບອອກໄປຕາມຕົວຈິງ ເພາະເຖິງນາງຈະໄປຢູ່ໃນເມືອງ ນາງກໍຍັງຖືວ່າອັນຖິ່ນຖານບ້ານເກີດຂອງຕົນນັ້ນຢູ່ບ້ານນອກ ຊຶ່ງເຖິງຈະໄປຢູ່ໃນເມືອງດົນນານພຽງໃດ ຕົນນັ້ນກໍຍັງເປັນຄົນບ້ານນອກ ບໍ່ເທົ່າທ່າ ເທົ່າເທີ່ມຄືສາວໃນເມືອງເຂົາ ທ່ານຜູ່ບັງຄັບກອງພັນຮູ້ສຶກບໍ່ພໍໃຈທີ່ສາວນາງນ້ອຍນີ້ ຊ່າງບໍ່ຮູ້ຈັກສໍພໍຄືກັບຍິງສາວໂດຍທົ່ວໆໄປ ທີ່ເມື່ອຮູ້ຕົນເປັນເຖິງຜູ່ບັງຄັບກອງພັນ ແມ່ນລ້ວນແລ້ວແຕ່ວ່າ ໃຫ້ທ່າຍ່າງອອກຫນ້າອອກຕາ ຊຶ່ງນັ້ນທ່ານຄິດວ່າ ມັນເປັນອະພິສິດຂອງທ່ານໃນນາມຜູ່ຄົງໄວ້ຊຶ່ງອໍານາດໃນເມືອງນີ້ ແຕ່ເມື່ອມາເຫັນວ່າ ອັນສາວນີ້ຄົງຈະເປັນສາວທີ່ບໍ່ເຄີຍຜ່ານມືຊາຍມາກ່ອນ ທ່ານຈຶ່ງແຮ່ງຮູ້ສຶກຄຶກຄັກໃນຫົວໃຈຢ່າງແປກໆ ໄດ້ແບບນີ້ມັນຈັ່ງຊິສົມກູ ນີ້ຄືຄວາມຫມາຍທີ່ບົ່ງບອກອອກມາຈາກສາຍຕາຂອງທ່ານຫລັກໄມ້ໃຫຍ່ສູງທ່ານນີ້

ຕລອດເວລາທີ່ຕ້ອງໄດ້ນັ່ງເປັນເພື່ອນກັບທ່ານບັງຄັບບັນຊາກອງພັນນັ້ນ ວອນວິໄລກໍອຶດຄຶດເຖິງອິສຣະບໍ່ໄດ້ ບໍ່ຮູ້ວ່າປານນີ້ເຂົາຈະເຮັດຫຍັງຢູ່ ນີ້ຫາກເຂົາຮູ້ວ່າ

ນາງຈະຕົກຢູ່ໃນສະພາບກືນບໍ່ເຂົ້າຄາຍບໍ່ອອກຄືແນວນີ້
ເຂົາຍັງຈະຫານປະໃຫ້ນາງກັບບ້ານໂດຍບໍ່ມີເຂົາຮ່ວມທາງນຳບໍ່? ອິສຣະບອກແຕ່ວ່າ
ເຂົາຕ້ອງໄດ້ຄອຍດູແລກິຈກັມການປູກສ້າງໂຮງຮຽນ ຊຶ່ງຫາກເປັນອີກຫລາຍທິດຂ້າງໜ້າ
ເຂົາຄົງຈະປີກຕົວມາກັບນາງໄດ້ ເພາະເຂົາເອງກໍຕັ້ງໃຈທີ່ຈະຢ້ຽມຢາມພໍ່ແມ່
ຄອບຄົວຂອງນາງຢູ່ແລ້ວ ແຕ່ກໍບໍ່ທັນຫາໂອກາດໄດ້ຈັກເທື່ອ
ເນື່ອງຈາກພໍ່ແມ່ຂອງເຮັດຕັ້ງກອງບຸນຢູ່ວັດເພື່ອບວດນ້ອງຊາຍຂອງນາງ
ນາງຈຶ່ງຈຳຕ້ອງກັບບ້ານໂດຍປາສຈາກຕົວເຂົາ



ວອນວິໄລຕັ້ງໃຈວ່າຈະຢູ່ພັກເຊົາກັບພໍ່ແມ່ຈັກທິດນຶ່ງ ແຕ່ທັນທີທີ່ເຮັດບຸນກອງບວດແລ້ວ
ນາງກໍຂໍຕົວກັບນະຄອນຫລວງໂດຍອ້າງວ່າ ເທົ່າທີ່ມາໄດ້ນີ້ກໍເພາະມີເພື່ອນຄ່ອຍພັດຟ້ຽນໃຫ້
ດັ່ງນັ້ນເພື່ອເຫັນແກ່ເພື່ອນແລະກໍເມື່ອງານທາງບ້ານຮຽບຮ້ອຍໄປແລ້ວ
ນາງຈຶ່ງຢາກຈະຂໍຕົວກັບກ່ອນ ສ່ວນພໍ່ແມ່ບໍ່ອາດຂືນລູກສາວໄດ້ ຈຶ່ງຍອມອະນຸຍາດ
ແຕ່ກໍບໍ່ຫມົ້ນສັ່ງລູກໃຫ້ພາຄົນຮັກມາຢາມພໍ່ແມ່ໃຫ້ໄດ້

ຄືນກ່ອນທີ່ນາງຈະອຳລາພາຈາກນັ້ນ ທ່ານຜູ່ບັງຄັບກອງພັນກໍມາຢ້ຽມເຮືອນນາງດັ່ງທີ່ເຄີຍເປັນມາ
ແຕ່ຄືນນີ້ແທນທີ່ຈະນັ່ງລົມກັບນາງ ທ່ານກັບເຂົ້າໄປນັ່ງລົມກັບພໍ່ແມ່ຂອງນາງ
ແລະກ່ອນທີ່ທ່ານຈະອຳລາຈາກໄປນັ້ນ ທ່ານກໍສົ່ງຮອຍຍິ້ມອັນມີຄວາມຫມາຍມາໃຫ້ນາງ
ເຫມືອນນຶ່ງຈະວ່າ ມື້ໜ້າທີ່ເຮົາສອງພົບກັນອີກ ນ້ອງຈະມາເປັນຂອງອ້າຍ

ທ່າມກາງຄວາມມືດມິດຂອງຂ່ອນຄືນນັ້ນ ວອນວິໄລບໍ່ອາດຂັບເປືອກຕາຂອງນາງໃຫ້ຫລັບລົງໄດ້
ປາກຄຳຂອງພໍ່ທີ່ວ່າ ທ່ານຜູ່ບັງຄັບບັນຊາກອງທະຫານປະຈຳເມືອງມາເວົ້າຈາຂໍເອົານາງ

ໄປເປັນລູກເປັນເມັຽ ເຮັດໃຫ້ນາງບໍ່ເຂົ້າໃຈວ່າມັນແມ່ນຫຍັງກັນແທ້ທີ່ເກີດຂຶ້ນກັບນາງ ເພາະຢູ່ບໍ່ຢູ່ກໍມີຄົນມາສູ່ຂໍ ທັງທີ່ນາງບໍ່ໄດ້ມັກຮັກທ່ານຜູ່ນັ້ນແມ້ນແຕ່ຫນ້ອຍດຽວເລີຍ ພໍ່ແມ່ຂອງນາງກໍມີແຕ່ວ່າ ໃຫ້ນາງໄປເປັນຜູ່ຕັດສິນເອົາເອງເລື້ອງການສ້າງຄອບຄົວນີ້ ຫາກວ່ານາງຫມາຍຫມັ້ນລົ້ມຫົວຈົມທ້າຍກັບອິສຣະ ກໍຂໍໃຫ້ເຂົາມາສູ່ຂໍຕາມປະເພນີ ແລະຫາກນັ້ນບໍ່ອາດເປັນໄປໄດ້ງ່າຍໆ ທາງພໍ່ແມ່ກໍຢາກໃຫ້ນາງຄິດເຖິງພໍ່ແມ່ ຜູ່ທີ່ເປັນໄມ້ໃກ້ຝັ່ງນີ້ ຫາກວ່າລູກສາວຕົກລົງໃຈກັບທ່ານຜູ່ບັງຄັບບັນຊາກອງພັນ ພໍ່ແມ່ກໍຈະຫມົດຫ່ວງເລື້ອງຂອງອະນາຄົດນາງນັ້ນ ແມ້ນວ່າແມ່ຂອງນາງຈະຮູ້ໃຈລູກສາວວ່າ ດວງໃຈຂອງລູກນີ້ບໍ່ມີໄວ້ໃຫ້ໃຜອີກແລ້ວນອກຈາກອິສຣະຄົນດຽວ ແມ່ກໍບໍ່ອາດຫລົງລືມຢ້ຳເຕືອນນາງໃຫ້ຕະຫນັກວ່າ ການເກີດມາເປັນລູກຜູ່ຍິງນັ້ນໃຫ້ມີຂອບເຂດ ຫາກອິສຣະຫມາຍຫມັ້ນປັ້ນມືເປັນທອງແຜ່ນດຽວກັບລູກແທ້ ກໍຂໍໃຫ້ເຂົາຟ້າວດຳເນີນການເສັຽຢ່າງໄວ ບໍ່ຊັ້ນບໍ່ຮູ້ວ່າ ທ່ານຜູ່ບັງຄັບບັນຊາກອງພັນຈະຄິດແນວໃດຕໍ່ຄອບຄົວຂອງນາງ ທີ່ບໍ່ຍອມເຂົ້າຂ້າງທ່ານນັ້ນ ວອນວິໄລຮູ້ເຖິງຄວາມຫມາຍຂອງຄຳວ່າ “ບໍ່ຊັ້ນ” ໄດ້ດີ ແລະນາງກໍຕັ້ງໃຈວ່າ ຈະຫາຄຳຕອບຈາກຊາຍຄົນຮັກໃຫ້ໄດ້ກ່ອນທີ່ເລື້ອງລາວທີ່ນາງບໍ່ຢາກຈະຄິດບານປາຍໄປ ຢ່າງເປົ່າເຫດ



## ໕. ຮັກນີ້ຢູ່ໃສກັນແທ້?

ຄືນນີ້ ທັງອິສຣະແລະວອນວິໄລຕ່າງກໍບໍ່ໄດ້ມີວຽກງານຫຍັງໃຫ້ຕ້ອງໄດ້ເຮັດ ຊຶ່ງນັ້ນກໍຫມາຍຄວາມວ່າທັງສອງຄົນໄດ້ມີໂອກາດຢູ່ນຳກັນສອງຕໍ່ສອງ

ໂດຍສັດຈິງແລ້ວທັງສອງຕ່າງກໍຢາກໃຫ້ມີໂອກາດເຊັ່ນນີ້ເລື້ອຍໆ
ເພາະຕ່າງກໍຮູ້ຢູ່ໃນໂລກນີ້ຈະຫາຜູ້ໃດມາເຂົ້າໃຈຕົນ ເຫັນໃຈຕົນ ຄືດັ່ງທີ່ທັງສອງມີໃຫ້ກັນ
ແມ່ນບໍ່ມີອີກແລ້ວ ອີກຢ່າງກໍແມ່ນວ່າ ເມື່ອໂລກນີ້ມີພຽງເຂົາສອງຄົນ
ມັນກໍບໍ່ຕ່າງຫຍັງກັບບົດກະວີທີ່ຂຽນວ່າ

ຫາກແມ້ນແຫ່ງນີ້ມີເຈົ້າ
ພຽງຈັກຄັ້ງຈັກຄາວ
ຫນ້ານ້ຳໃນລຳທານ ເຖິງໃນຄືນວັນທີ່ປັ່ນປ່ວນ
ຈະເປັນປະກາຍລະຍິບລະຍັບ ຊວນຊົມ
ມວນຫມູ່ດອກໄມ້ ເຖິງໃນຍາມລະດູຫນາວມາປົກຄຸມ
ຈະຍັງສົ່ງກິ່ນຫອມຫອນ ຊວນດົມ
ແລະໃບໄມ້ແກ່ວງໄກ່ວໄປຕາມສາຍລົມ ເຖິງໃນຍາມຫມອງຫມົ່ນ
ຈະຍັງເປັນພາບສລັກຈິດ ຊວນໃຫ້ເມີ່ນອງ

ໂອ້ສຸດບູຊາ
ຫາກພຽງແຫ່ງນີ້ ມີເຈົ້າ
ມີເຈົ້າເທົ່ານັ້ນ ບໍ່ວ່ານະແຫ່ງຫົນໃດໆ
ໂລກຂອງຂ້ອຍ ຈະມີແຕ່ຄວາມສງົບສຸກ
ໃນນິດທຣາແຫ່ງຄວາມຫລັບຝັນ
ຈົນຊົ່ວນິດນິຣັນ



*ແລ້ວເປັນຫຍັງສອງຫນຸ່ມສາວຈຶ່ງບໍ່ຫາທາງທີ່ຈະຢູ່ເຊີງຫນ້າ*
*ຫລືໃນອ້ອມກອດຂອງກັນແລະກັນໃນທີ່ສຸດ ເພາະສິ່ງດັ່ງກ່າວບໍ່ແມ່ນຈຸດປະສົງຂອງຄວາມຮັກບໍ່?*
*ຫລືວ່າຍັງມີສິ່ງໃດທີ່ຊ່າງມີອຳນາດມາຂວາງກັ້ນຄວາມຮຽກຮ້ອງຕ້ອງການຂອງຫົວໃຈໄດ້?*
ວອນວິໄລເອງຢາກຈະບອກຕົວເອງວ່າ ອິສຣະນັ້ນຮັກນາງແລະກໍຫວັງທີ່ຈະສ້າງເຮືອນຫໍກັບນາງ
ແຕ່ນາງກໍບໍ່ອາດເຮັດໃຫ້ດວງໃຈຂອງນາງປັກຫມັ້ນກັບສິ່ງດັ່ງກ່າວໄດ້
ແຕ່ກ່ອນນາງກໍໄດ້ແຕ່ຄິດພຽງວ່າ ຄົງມີຈັກວັນທີ່ອິສຣະມອບທັງກາຍແລະໃຈໃຫ້ນາງພຽງຜູ້ດຽວ
ຫລືຢ່າງຫນ້ອຍກໍໃຫ້ຄວາມຫມັ້ນໃຈວ່າ ອັນຄວາມດີງາມທີ່ເຂົາມີໃຫ້ນາງນັ້ນຄືຄວາມຮັກອັນແນ່ແທ້
ບໍ່ແມ່ນພຽງຄວາມສົງສານທີ່ເກີດຈາກອຸດົມການຂອງເຂົາເທົ່ານັ້ນ

ວອນວິໄລຈື່ຈຳໄດ້ດີເຖິງຮອຍຈູມພິດທີ່ເຂົາບັນຈົງວາງລົງໄວ້ທີ່ຫນ້າຜາກຂອງນາງຢ່າງສຸດແສນ
ທີ່ຈະຖນຸຖນອມ ກ່ອນທີ່ເຂົາຈະລາເມືອເຮືອນຄືນກ່ອນມື້ສົມພາດວຽກງານຂອງເຂົານັ້ນ
ຫາກວ່ານີ້ເປັນກ່ອນທີ່ນາງໄດ້ຮຽນຮູ້ວ່າເຂົາເຄີຍມີວຽງປະພາຢູ່ໃນດວງໃຈຂອງເຂົາມາກ່ອນ
ນາງຄົງຈະມີຄວາມສຸກທີ່ສຸດ ເພາະນັ້ນກໍເທົ່າກັບວ່າເປັນບາດກ້າວແຮກ
ຂອງຄວາມເປັນຊີວິດຄູ່ໃນກາລຂ້າງຫນ້າ ທີ່ບໍ່ມີພຽງໄຟສເນ່ຫາອັນຮ້ອນຮຸ່ມແຕ່ຫາກຍັງມີ
ຄວາມເປັນກັລຍານິດທີ່ຫມັ້ນຄົງແລະແຂງແກ່ນຕລອດໄປນັ້ນອີກດ້ວຍ



ຂ້າງຝ່າຍອິສຣະເອງກໍຕະຫນັກວ່າ ອັນຄວາມສົນໃຈໃນຕົວຂອງວອນວິໄລ
ຊຶ່ງຕໍ່ມາກາຍເປັນຄວາມສົງສານແລະຄວາມຜູກພັນນັ້ນ ເຮັດໃຫ້ເຂົາອຶດອັດອັ້ນຕັ້ນໃຈ
ໃນສິ່ງທີ່ເຂົາໄດ້ຮັບຈາກນາງເປັນການຕອບແທນບໍ່ໄດ້

ໂອ້ນໍ ອັນຮອຍຍິ້ມໃນທຸກຄັ້ງທີ່ນາງໄດ້ເຫັນເຂົາ
ມັນຊ່າງລະລາຍທຸກຄວາມທຸກກັງວົນແລະເສົ້າຫມອງໃນຊີວິດຂອງເຂົາໄດ້
ແລະອັນດວງຕາທີ່ສໍ່ແວວເຖິງຄວາມຮັກອັນຍິ່ງໃຫຍ່ຂອງນາງນັ້ນ ມັນກໍຊ່າງບອກຢໍ້າໃຫ້ເຂົາວ່າ
ບໍ່ວ່າເຂົາຈະເປັນເຊັ່ນໃດ ອັນຮັກຂອງນາງນີ້ຈະມີໄວ້ໃຫ້ຕໍ່ແຕ່ເຂົາຜູ່ດຽວຕລອດໄປ ແລ້ວເຂົາເດ?
ພ້ອມແລ້ວບໍ່ທີ່ຈະສນອງຕອບສິ່ງທີ່ນາງຍິບຍື່ນມາໃຫ້ເຂົາດ້ວຍດວງໃຈທີ່ບໍຣິສຸດຜຸ່ດຜ່ອງນັ້ນ

"ອິສຣະ ມື້ນີ້ຢູ່ກິນເຂົ້າກັບຂ້ອຍນໍ ຊິເຮັດກ້ອຍປາໃຫ້ກິນ" ສຽງຂອງວອນວິໄລດັງຂຶ້ນຂ້າງໆ
ອັນເຮັດໃຫ້ອິສຣະຕື່ນຈາກພະວັງຂອງຄວາມນຶກຄິດ ກໍດັ່ງເຊັ່ນເຄີຍ
ເວລາໃດກໍຕາມນາງກໍຢາກໃຫ້ເຂົາໄດ້ກິນແຕ່ແນວດີໆ ແນວທີ່ເຂົາມັກ ນາງມັກເວົ້າວ່າ
ເຂົານັ້ນຄວນຈະຕື່ມນໍ້າຫນັກຂຶ້ນ ເພື່ອຈະບໍ່ໄດ້ເຈັບໄດ້ເປັນງ່າຍໆ
ແລະກໍເພື່ອຈະໄດ້ມີເຫື່ອແຮງສູ້ຊົນກັບວຽກງານອັນຫ່ວມມືຂອງເຂົານັ້ນຢ່າງບໍ່ຮູ້ຈັກທໍ້ແທ້
"ກໍໄດ້ ແຕ່ເທື່ອນີ້ຕ້ອງໃຫ້ຂ້ອຍຊ່ອຍເຮັດຢູ່ເຮັດກິນນໍາເດີ" ອິສຣະກ່າວຂຶ້ນຢ່າງຫນັກແຫນ້ນ
ເພາະເທົ່າທີ່ຜ່ານມາ ວອນວິໄລຈະບໍ່ຍອມໃຫ້ເຂົາເຮັດຫຍັງຊ່ອຍ
ສ່ວນຫລາຍແລ້ວນາງຈະກະຕຽມທຸກຢ່າງໄວ້ຫມົດແລ້ວ ບາດຮອດຍາມກິນມາ
ກະຈັ່ງໄປຮຽກເອີ້ນເຂົາມາ ຫລາຍເທື່ອອິສຣະບອກນາງວ່າ
ນາງບໍ່ແມ່ນຄົນໃຊ້ແລະເຂົາກໍຊັງການມີຄົນໃຊ້ທີ່ມັກປະຕິບັດກັນໃນບ້ານເຮືອນຂອງຜູ່ທີ່ມີເງິນເຫລືອ
ໃຊ້ສອຍ ແຕ່ນາງກໍບໍ່ຍອມຢູ່ດີ ນາງວ່ານັ້ນເປັນຄວາມເຕັມໃຈຂອງນາງທີ່ຈະໄດ້ຕອບບຸນແທນຄຸນ
ໃນສິ່ງເຂົາມອບໃຫ້ນາງ ຊຶ່ງຊົ່ວຊີວິດນີ້ນາງຄົງໃຊ້ຄືນບໍ່ຫມົດໄດ້

ວອນວິໄລທໍາອິດກໍວ່າຈະບໍ່ຍອມໃຫ້ເຂົາເຮັດຫຍັງຊ່ອຍ
ແຕ່ເມື່ອມາເຫັນວ່າເຂົາຈະບໍ່ຍອມແທ້ໆໃນເທື່ອນີ້ ນາງຈຶ່ງອ່ອນຂໍ້ນໍາໃນທີ່ສຸດ *ອາດຈະເປັນຍ້ອນວ່າ*
*ເທື່ອນີ້ເປັນເທື່ອທໍາອິດທີ່ທັງສອງແຕ່ງຢູ່ແຕ່ງກິນນໍາກັນ ຄວາມຂວາຍເຂີນໃນຄວາມສໍານຶກທີ່ວ່າ*
*ມີເຈົ້າກໍມີຂ້ອຍ ແລະມີຂ້ອຍກໍມີເຈົ້າ ເຮັດໃຫ້ທັງສອງຫນ້າແດງ*
*ເມື່ອຄິດເຖິງສິ່ງດັ່ງກ່າວຂຶ້ນມາຍາມໃດ*

ວອນວິໄລນັ້ນຮູ້ສຶກວ່າ ຈະຫນ້າແດງເປັນພິເສດອັນສະແດງອອກທີ່ແກ້ມຂາວນວນຂອງນາງ
ຊຶ່ງດຽວນີ້ກາຍເປັນສີຫມາກເດື່ອໄປແລ້ວ ທັງນັ້ນທັງນີ້ກໍເພາະນິ້ວມືຂອງນາງກັບໄປຈັບຕ້ອງ
ກັບຜັກໃບດຽວທີ່ທັງສອງລ້າງຮ່ວມໃນຊາມໃບນ້ອຍ ແລະທີ່ສໍາຄັນກໍຄືບາງຄັ້ງຄາວ
ມັນກໍຫລີກລ້ຽງບໍ່ໄດ້ທີ່ນິ້ວມືສ້ອຍງາມຂອງນາງ ຈະໄປເກາະຕ່ອງແລະສຽດສີ
ກັບນິ້ວມືອັນຍາວຢຽດຂອງອິສຣະບໍ່ໄດ້ ນີ້ບໍ່ຄວາມຮັກ

เປັນຫຍັງມັນຈຶ່ງເຮັດໃຫ້ນາງມີຄວາມສຸກຢ່າງທ່ວມລົ້ນຫົວໃຈແບບນີ້?
ຫາກວ່າຊີວິດນີ້ຈະມີເຂົາຢູ່ຄຽງຂ້າງຢ່າງບໍ່ແປປ່ຽນເຊັ່ນນີ້ຕລອດໄປ
ໃນໂລກນີ້ນາງຈະບໍ່ຕ້ອງການແລະຮຽກຮ້ອງສິ່ງໃດອື່ນອີກເລີຍ

*ກ່ວາການແຕ່ງຢູ່ແຕ່ງກິນຈະແລ້ວໆໄປ ກໍຫລິ້ນເອົາຄູ່ຫນຸ່ມສາວຫນ້າແດງກັນໄປຫລາຍເທື່ອ*
*ອິສຣະກໍບໍ່ແນ່ນວ່າ ຈະເປັນຄົນຂີ້ອາຍກະດັກກະດໍ້ ແຕ່ອັນສີທີ່ແຕ້ມແຕ່ງເທິງໃບຫນ້າຂອງເຂົານັ້ນ*
*ເຂົາບໍ່ອາດບັງຄັບໄດ້ ຫລືນີ້ເປັນພຽງທັມມະຊາດຂອງຫນຸ່ມສາວຜູ່ໄຮ້ຊື່ງເລ່ນານຍາຊື່ໆ?*
*ຫລືວ່ານີ້ເປັນທີ່ສິ່ງກົ້ນບຶ້ງຂອງຫົວໃຈຢາກຈະບອກໃຫ້ເຂົາໄດ້ຮັບຊາບວ່າ*
*ຍິງສາວທີ່ຢູ່ຄຽງຂ້າງເຂົານີ້ຄືສິ່ງທີ່ເຂົາຂາດບໍ່ໄດ້ ເພາະຫາກວັນໃດເຂົາຂາດນາງໄປ ກໍເທົ່າກັບວ່າ*
*ກົ້ນບຶ້ງຂອງຫົວໃຈເຂົາຈະມີແຕ່ຄວາມມືດມົດແລະຊຶບເຊົາຕລອດຊົ່ວນິດນິຣັນນັ້ນເອງ*

ມະນີຜູ່ຊຶ່ງວ່າຈະມາຮ່ວມກິນເຂົ້ານຳຄູ່ຫນຸ່ມສາວ
ໄດ້ແຕ່ຢືນແນມເບິ່ງປະຕິກິຣິຍາຂອງຄົນທັງສອງຢູ່ທາງເຂົ້າປະຕູຢ່າງມິດຊື່ມ
ນາງຢາກຈະດີໃຈນຳເພື່ອນທີ່ຍິ້ມຫົວໄດ້ຢ່າງເຕັມທີ່ ນາງຈື່ໄດ້ດີວ່າ
ຫລັງຈາກທີ່ເພື່ອນກັບມາແຕ່ຢາມບ້ານແລ້ວ ເພື່ອນກໍຫມົກຫມຸ່ນໃນໃຈເປັນອາດໃດວາດນຶ່ງ
ຈົນນາງຕ້ອງໄດ້ໃຊ້ເວລາຂາດຄັ້ນເອົາສິ່ງທີ່ເພື່ອນເປັນກັງວົນນັ້ນອອກມາໄດ້ໃນທີ່ສຸດ ຊຶ່ງນັ້ນກໍຄື
ເພື່ອນມີຄົນໃຫຍ່ໂຕມາຂໍແລະກໍຕ້ອງການຄຳຕອບໃນໄວໆ
ແລະຫາກວ່າຄອບຄົວຂອງເພື່ອນບໍ່ອາດໃຫ້ຄຳຕອບທີ່ເຫມາະສົມໄດ້ ບໍ່ຮູ້ວ່າຫຍັງຈະເກີດຂຶ້ນ
ຊຶ່ງທັງຫມົດນີ້ກໍລ້ວນແລ້ວແຕ່ຂຶ້ນກັບອິສຣະຄົນດຽວ ຫາກວ່າເຂົາປັກໃຈກັບເພື່ອນແທ້
ເລື້ອງລາວທັງຫມົດທີ່ວ່າຈະສັບສົນນັ້ນກໍຄົງຕົກໄປເອງ
ແຕ່ຫາກວ່າອິສຣະຍັງຄົງລີລໍໃຫ້ເພື່ອນລໍຖ້າເຂົາໄປເລື້ອຍໆໂດຍບໍ່ຮູ້ວ່າປານໃດເຂົາຈະມາສູ່ຂໍເພື່ອນ
ນັ້ນກໍເທົ່າກັບວ່າເປັນການໄຂຊ່ອງທາງໃຫ້ຄົນອື່ນໄດ້ມາແຍ່ງຊິງເພື່ອນໄປຢ່າງມີຂໍ້ອ້າງທີ່ຟັງຂຶ້ນ



“ມະນີ ມາແລ້ວກະມາເຮັດເປັນຄືຄົນອື່ນໄປໄດ້”
ວອນວິໄລກ່າວຂຶ້ນຢ່າງຂວຍເຂີນເມື່ອທັນສັງເກດເຫັນວ່າ
ເພື່ອນຂອງຕົນມາລັກລີ້ຈອບເບິ່ງຕົນກັບອິສຣະຢູ່ປະຕູທາງເຂົ້ານັ້ນ
“ອຸ໋ຍ ກະຢາກເຫັນກັບວ່າ ອັນຄວາມຮັກຂອງຫນຸ່ມສາວທີ່ຮັກກັນຢ່າງກົມກືນນີ້
ມັນເປັນແນວໃດກັນແທ້ຊື່ໆດອກ?”
ມະນີເວົ້າອອກທັງແກມຢອກແລະກໍທັງຫມາຍຄວາມແນວນັ້ນແທ້
“ເອົ໋າ ໂຕມາແນວນີ້ກໍດີ ເບິ່ງອ້າຍອິສຣະທ້ອງຂົດຢາກຈະກິນເຂົ້າແລ້ວ” ວອນວິໄລເວົ້າໄປທາງອື່ນ
ເພາະຂືນຕໍ່ລໍ້ຕໍ່ຄວາມກັບເພື່ອນ ຈັກຫນ້ອຍອິສຣະກໍເຫັນໄຕ໋ໄປໄດ້

ພາຍຫລັງຈາກກິນເຂົ້າກິນປາແລ້ວ
ມະນີກໍຟ້າວຂໍຕົວກັບເພາະນາງບໍ່ຢາກເປັນກ້າງຂວາງຄໍສອງຫນຸ່ມສາວ
ທີ່ຕ້ອງມີຫລາຍແນວໃຫ້ໄດ້ປັບຄວາມເຂົ້າໃຈກັນນັ້ນ
ນາງຮູ້ວ່າເພື່ອນຂອງນາງຍິ່ງກ່ວາເວລາໃດຕ້ອງການຄວາມຫມັ້ນໃຈຈາກອິສຣະເປັນທີ່ສຸດ
ແລະຄວາມຫມັ້ນໃຈນັ້ນກໍບໍ່ອາດລີລໍຫລືຊັກຊ້າໄດ້ອີກຕໍ່ໄປ

ຝ່າຍວອນວິໄລເມື່ອໄດ້ມາຢູ່ສອງຕໍ່ສອງກັບຊາຍຄົນຮັກອີກຄັ້ງ
ນາງກໍບໍ່ຈັກຈະເລີ້ມຕົ້ນບອກຄວາມໃນໃຈຂອງນາງ
ໂດຍສະເພາະກໍແມ່ນກັບເລື້ອງການສູ່ຂໍຊື່ງມາພ້ອມກັບການຂົ່ມຂູ່ຄອບຄົວຂອງນາງໂດຍທາງອ້ອມ
ນັ້ນ ນາງຢາກຈະປະໃຫ້ແສງເດືອນແສງດາວທີ່ກະຈັດກະຈາຍກັນຢູ່ທົ່ວທ້ອງຟ້າບອກບົ່ງເຂົາແທນ
ເພາະສຳຫລັບນາງ ເຖິງນາງຈະຮັກເຂົາຫລາຍປານໃດກໍຕາມ

ນາງກໍບໍ່ອາດຈະຄາດຄັ້ນເອົາຄຳໝັ້ນສັນຍາຈາກເຂົາໄດ້ ນອກນັ້ນ ນາງຍັງບອກຕົນເອງວ່າ
ຫາກວ່າຊີວິດນີ້ນາງຕ້ອງໄດ້ຂາດເຂົາໄປ
ກໍຂໍໃຫ້ເປັນການເສັຽສລະອັນເກີດມາຈາກຄວາມຮັກອັນທ່ວມທົ້ນທີ່ນາງມີຕໍ່ເຂົານັ້ນ

ອິສຣະຊຶ່ງກໍບໍ່ແມ່ນວ່າ ຈະບໍ່ສັງເກດເຖິງຄວາມເປັນໄປຂອງວອນວິໄລ
ຊຶ່ງຫລາຍຄັ້ງຈະເມີ່ລອຍຢ່າງຜິດປົກກະຕິນັ້ນ
ແລະເມື່ອມາໄດ້ມີໂອກາດເຫັນຍິງສາວທີ່ເປັນດັ່ງນີ້ງເງົາຕາມຕົວຂອງເຂົາ
ອິສຣະຈຶ່ງເປັນຜູ່ທີ່ເອີ່ຍຂານຂຶ້ນກ່ອນໝູ່ວ່າ
"ວອນ ລະຍະຫລັງໆນີ້ ເຈົ້າຄືບໍ່ຢູ່ກັບເນື້ອກັບຕົວນີ້ລະ ຖ້າບໍ່ເປັນການເກີນໄປ ກໍເວົ້າສູ່ຂ້ອຍຟັງແດ່
ເຈົ້າກໍຮູ້ວ່າ ຂ້ອຍນີ້ເປັນຫ່ວງເຈົ້າຫລາຍ"
ວອນວິໄລເຫັນໄດ້ຢ່າງບໍ່ມີໃຫ້ເປັນສົງໃສວ່າ ອິສຣະນັ້ນເປັນຫ່ວງນາງແທ້
ຫາກວ່ານາງອ້ອນວອນຂໍໄດ້ ນາງຢາກຈະໄດ້ຍິນຄຳວ່າ "ຮັກ" ແທນຄຳວ່າ "ຫ່ວງ"
ຈາກປາກຄຳຂອງເຂົາຫລາຍກ່ອນ
"ຂ້ອຍບໍ່ເປັນຫຍັງດອກ ຂ້ອຍມີແຕ່..." ນາງຢຸດຢູ່ກາງຄັນ ໃຈນຶ່ງກໍຢາກບອກໃຫ້ເຂົາໄດ້ຮັບຮູ້
ແຕ່ອີກໃຈນຶ່ງກໍບອກວ່າ ຫາກເຂົາຮັກເຮົາແທ້ ເຂົາຫາກຈະຮູ້ເອງ
"ແຕ່ຫຍັງ?" ອິສຣະຖາມຂຶ້ນດ້ວຍໃຈຈົດຈໍ່
"ແຕ່...ບໍ່ຄ່ອຍເຫັນໜ້າຜູ່ທີ່ຄ່ຳບໍ່ຍືນ ຄືນບໍ່ໄດ້ຢູ່ ເຮັດວຽກເປັນປະຈຳ"
ນາງລຽງໄປທາງອື່ນໂດຍເອົາເລື້ອງຢອກລໍ້ການບໍ່ຄ່ອຍມີເວລາມາຫານາງປານໃດມາໃສ່ແທນ
"ກະດຽວວ່າແນວອື່ນຊັ້ນດອກ ເອົາໄວ້ບາດໂຮງຮຽນແລ້ວ ຊິມານັ່ງຈອງໜ້າຄູ່ນີ້
ຈົນໃຫ້ໄລ່ເມືອເອງພຸ້ນເດີ"
ອິສຣະໂລ່ງອົກໄປຫລາຍເຕີບ ຊຶ່ງກໍຄືນາງເວົ້າມາ ເຂົານີ້ບໍ່ຄ່ອຍມີເວລາໃຫ້ນາງປານໃດ
ນອກຈາກເວລາເລັກໆນ້ອຍຈາກການໄປຮັບໄປສົ່ງນາງທີ່ຮ້ານກິນດື່ມ
ຫລືບໍ່ຊັ້ນກໍວັນເສົາວັນທິດທີ່ວຽກງານທາງອື່ນບໍ່ລາກຕົວເຂົາໄປກ່ອນນັ້ນ

ຄຳເວົ້າຂອງອິສຣະອັນເກີດຈາກຄວາມຈິງໃຈແລະຄວາມເປັນຫ່ວງຂອງເຂົາຕໍ່ນາງນັ້ນ
ເຮັດໃຫ້ວອນວິໄລເຖິງກັບຍິ້ມເປີ້ຍອອກມາໜ້ອຍນຶ່ງ ນາງແນ່ໃຈວ່າ
ຂໍພຽງໃຫ້ເວລານັ້ນຢູ່ຄຽງຂ້າງນາງ
ອິສຣະແລະນາງຈະບໍ່ມີວັນພັດພາກຈາກກັນທັງໃນຕົວຈິງແລະຄວາມຝັນຕລອດໄປ

ກ່ອນທີ່ຂ່ອນເດີກນັ້ນຈະເປັນສັນຍານບອກເຂົາໃຫ້ເມືອຫລັບເມືອນອນ
ອີສຣະຈັບມືວອນວິໄລທີ່ວາງໄວ້ຢູ່ເທິງໂຕະມາປະຄອງຖື ໃນຕາຂອງເຂົາເຫມືອນນຶ່ງຈະບອກວ່າ
ໃຫ້ນາງລໍຄອຍເຂົາໄປກ່ອນ ແລະເມື່ອວັນນັ້ນມາເຖີງ
ເຂົາຈະບໍ່ປະໃຫ້ຢູ່ເທີນຫ່າງແມ້ແຕ່ເວລານາທີດຽວ ເພາະຄວາມຮັກທີ່ເຂົາມີຕໍ່ນາງນັ້ນ
ໃນທີ່ສຸດມັນກໍບໍ່ອາດສາມາດທີ່ຈະອົດກັ້ນໄວ້ໃນດວງໃຈຂອງເຂົາອີກແລ້ວ



## ຜ. ຄວາມຄິດເຫັນຂອງຄໍາຫມັ້ນ

ວອນວິໄລນັ່ງໃຈເມີ່ລອຍຢູ່ກັບເຮືອນແຕ່ເຊົ້າ ພ້ງນເຮັດວຽກມື້ນີ້ ນາງກໍຂໍໃຫ້ມະນີເປັນຜູ່ເຮັດແທນ
ນາງບອກວ່າຮູ້ສຶກເປັນເມື່ອຍໆ ຄົງຈະມາວຽກບໍ່ໄດ້ ແລະກໍດັ່ງເຄີຍ
ມະນີຜູ່ເຫັນໃຈເພື່ອນກໍບໍ່ຕິຕ່າງຫຍັງ ເພາະກໍຮູ້ໆວ່າ ຖ້າເພື່ອນບໍ່ເປັນຫຍັງຫນັກເກີນໄປແລ້ວ
ເພື່ອນຈະບໍ່ຍອມຂີ້ແງະແງ່ງອນເລີຍອັນເລື້ອງຫາເງີນຫາຄໍາເພື່ອສະສົມໄວ້ຊື່ງກາລຂ້າງຫນ້ານີ້
ມະນີເອງກໍໄດ້ແຕ່ວ່າ ບໍ່ສະບາຍກໍໃຫ້ພັກຜ່ອນຫລາຍໆ ບາດແລ້ວວຽກແລ້ວງານແລ້ວ
ຊິໄປແວະເບິ່ງອາການ

ຂ້າງຝ່າຍວອນວິໄລກໍໄດ້ແຕ່ສົ່ງສາຍຕາໄປຂ້າງຫນ້າຢ່າງບໍ່ມີຈຸດຫມາຍປາຍທາງ
ໃນຫົວຄິດຂອງນາງເຕັມໄປດ້ວຍຄໍາຖາມທີ່ຕ້ອງການຢາກຈະໄດ້ຍິນຄໍາຕອບ
ຊື່ງເຖີງຈະເປັນຄໍາຕອບທີ່ນາງຈະບໍ່ຢາກໄດ້ຍິນກໍຕາມ ໃຈແທ້ນາງກໍຢາກຈະໄປປຶກສາກັບອີສຣະ
ຜູ່ເປັນຕົ້ນຕໍ່ຂອງບັນຫາທັງຫມົດນີ້ ແຕ່ນາງກໍບໍ່ຄິດວ່າມັນບໍ່ສົມຄວນເລີຍ
ຫລືບາງທີນາງຈະເຜີຍຄວາມໃນໃຈສູ່ມະນີຟັງ ແຕ່ກໍຫວັ່ນໆວ່າ
ຄໍາເວົ້າຄໍາປຶກສາຂອງຕົນຈະໄປເຖີງຫູອີສຣະເຂົ້າ

ເພາະມະນີແຮ່ງຄັນແຂ້ວຢາກໃຫ້ເລື້ອງນີ້ມັນຕົກໄປຈັກເທື່ອສະ
ຊຶ່ງກໍຄືເວົ້າໃຫ້ມັນຕົກແຕກກັນໄປຂ້າງນຶ່ງກັບອິສຣະນັ້ນເອງ



ພວມກຳລັງວ້າວຸ່ນໃຈຢູ່ນັ້ນ ສຽງລົດໂມໂຕໄຊກໍດັງຂຶ້ນ ແລະໃນທັນໃດນາງກໍຮູ້ວ່າ
ນັ້ນບໍ່ແມ່ນສຽງລົດຂອງອິສຣະຊຶ່ງມີສຽງດັງສະເພາະສະເນາະຫູສຳຫລັບນາງເປັນພິເສດ
ບໍ່ທັນທີ່ຈະຄິດຕວງວ່າໃຜເປັນເຈົ້າຂອງລົດໂມໂຕໄຊນັ້ນ ຄຳຫມັ້ນກໍໂຜ່ຫນ້າເຂົ້າມາຫາ
"ອ້າຍຄຳຫມັ້ນນີ້ເອງ ກະດຽວວ່າໃຜຊັ້ນດອກ" ວອນວິໄລໂລ່ງໃຈເປັນບາດໃຫຍ່
ແລະກໍຮູ້ສຶກດີໃຈທີ່ໄດ້ເຫັນຫນ້າເຂົາ ເພາະລະຍະຫລັງໆເມື່ອເຂົາປະຈັກແຈ້ງວ່າ
ດວງໃຈຂອງນາງນັ້ນມີໄວ້ໃຫ້ແຕ່ອິສຣະຈົນຫມົດແລ້ວ ເຂົາກໍເລີຍຂໍເປັນພຽງອ້າຍຮັກຄົນນຶ່ງຊື່ໆ
ເຂົາບອກນາງວ່າ ເຂົາອີ່ມໃຈທີ່ຈະຮັກນາງຢ່າງນ້ອງສາວ ແລະຫາກຄວາມດີນີ້ມີຈິງ
ວັນນຶ່ງເຂົາຄົງຈະສົມຫວັງກັບຍິງທີ່ເຂົາຮັກ ແລະກໍທີ່ມີນິໄສໃຈຄໍທັງຮູບຮ່າງຫນ້າຕາ
ບໍ່ຕ່າງຈາກວອນວິໄລຜູ່ທີ່ຫນ້າຮັກຂອງເຂົາອີກດ້ວຍ

"ອ້າຍແວະໄປຮ້ານມາ ມະນີບອກວ່າ ນ້ອງບໍ່ສະບາຍ
ກໍເລີຍຊື້ເຂົ້າປຽກຕ່ອນແນວທີ່ນ້ອງມັກມາໃຫ້" ຄຳຫມັ້ນທັງເວົ້າທັງຍື່ນຖົງເຂົ້າປຽກໃຫ້ນາງ
"ຂອບໃຈອ້າຍຫລາຍໆ ແຕ່ອ້າຍບໍ່ຫນ້າຈະເສັຽເງິນຊື້ມາໃຫ້ນ້ອງເລີຍ ອ້າຍກະຮູ້
ນ້ອງກິນຫຍັງກະໄດ້ຢູ່ດອກ" ວອນວິໄລເວົ້າອອກໄປຊື່ໆ ແຕ່ນາງກໍອົດຂອບໃຈເຂົາບໍ່ໄດ້
ນີ້ຖ້ານາງບໍ່ມີອິສຣະເຂົ້າມາໃນຊີວິດຂອງນາງກ່ອນ ນາງຄົງຈະອາດຈະມີໃຈໃຫ້ເຂົາ
ເພາະຍິ່ງເຂົາເຊົາຖິ້ມສາຍຕາທີ່ຊຸກຊົນແລະກໍທຳຕົວສົມເປັນຜູ່ໃຫຍ່ຄືບໍ່ດົນຜ່ານມາ ເຂົາກໍຍິ່ງມີສເນ່
ຫນ້າຮັກ ແລະຫນ້າເວົ້າລົມນຳເປັນແທ້ໆ

ຄຳຫມັ້ນແນມເບິ່ງວອນວິໄລ ຜູ່ຊຶ່ງເຂົາຮັກແລະເປັນຫ່ວງຖານນ້ອງທີ່ເຂົາບໍ່ມີນຳຫມູ່ຢູ່ດົນເຕີບ
ຈຶ່ງກ່າວຂຶ້ນວ່າ
"ຄິດວ່າ ຄົງຊິບໍ່ເປັນເລື້ອງຂອງອິສຣະຕີ່ໃນເທື່ອນີ້"
ນ້ຳສຽງຂອງເຂົາເຖິງຈະຄາຍຄວາມອິດສາໃນສິ່ງທີ່ຄູ່ແຂ່ງຂອງຕົນໃນເມື່ອກ່ອນໄດ້ຮັບຈາກຍິງສາວ
ທີ່ບໍຣິສຸດຜຸດຜ່ອງຄົນນີ້ ມັນກໍຍັງບໍ່ຫມົດສິ້ນເທື່ອ ດັງຂຶ້ນອີກຄັ້ງ
"ບໍ່ດອກອ້າຍ" ນ້ຳສຽງຂອງນາງເຖິງຈະຫວານ ກໍມີແນວຕຳຫນິໃຫ້ຄຳຫມັ້ນພໍຮູ້ສຶກຕົວໄດ້
"ຂໍໂທດ ອ້າຍຄິດວ່າ ບາງຄັ້ງອິສຣະຂອງນ້ອງອາດຈະຫລົງຕົວ ເຮັດຜິດໃຈນ້ອງໄປກໍໄດ້
ຊຶ່ງຖ້າເປັນແນວນັ້ນ ອ້າຍຊິເປັນຜູ່ໄປເວົ້າກັບເຂົາເອງ"
ວອນວິໄລຮູ້ວ່າ ຄຳຫມັ້ນພ້ອມທີ່ຈະປົກປ້ອງນາງ ຊຶ່ງນັ້ນນາງອົດທີ່ຈະຊຶ້ງໃນນ້ຳໃຈຂອງເຂົາບໍ່ໄດ້

ພອມວ່າຈະຕັດສິນໃຈບອກຄຳຫມັ້ນໃຫ້ຮູ້ໃນເລື້ອງທີ່ເກີດຂຶ້ນເມື່ອວານນີ້ຫລືບໍ່?
ກໍມີສຽງລົດໃຫຍ່ດັງຂຶ້ນຢູ່ຕໍ່ຫນ້າບ້ານເຊົ່າ
ແລະກໍສິ່ງທີ່ມາພ້ອມກັບສຽງລົດນັ້ນກໍຄືທ່ານຜູ່ບັນຄັງກອງພັນທີ່ເປັນເຈົ້າຂອງເລື້ອງລາວນັ້ນ
"ວອນ ອ້າຍວ່າຊິກັບເມືອໂພນໂຮງໃນມື້ນີ້ ກໍເລີຍແວ່ມາເບິ່ງ
ບໍ່ຮູ້ວ່ານ້ອງມີຄຳຕອບໃຫ້ອ້າຍແລ້ວບໍ່?" ທ່ານຜູ່ນັ້ນເອີ່ຍຂຶ້ນດ້ວຍສຽງອັນດັງ
ທີ່ເຖິງຈະພະຍາຍາມເຮັດໃຫ້ຫວານ ມັນກໍອອກມາເປັນການເສແສ້ງ ທັນທີທີ່ທ່ານເຫັນວ່າ
ມີຊາຍຄົນນຶ່ງມານັ່ງຢູ່ກັບວອນວິໄລກ່ອນຫນ້າທ່ານແລ້ວ ກິຣິຍາທ່າທາງຂອງທ່ານກໍຮູ້ສຶກວ່າ
ບໍ່ພໍໃຈຂຶ້ນມາໃນທັນໃດ
"ໂຕຮູ້ບໍ່ວ່າເຮົາເປັນໃຜ?" ທ່ານຜູ່ມາໃຫມ່ຫັນຫນ້າມາທາງຄຳຫມັ້ນ
ແລະກໍເຮັດສັນຍານໃຫ້ອົງຄະລັກທີ່ຕິດຕາມມາຂອງເພິ່ນໃຫ້ອອກຈາກລົດ
ເຂົ້າມາໃນເຮືອນນຳເພື່ອຊິງເປັນການຂົ່ມຂູ່ຕາມວິໄສຂອງຜູ່ທີ່ມີອຳນາດບາດໃຫຍ່
ຄຳຫມັ້ນຊຶ່ງພໍຮູ້ວ່າຫຍັງເປັນຫຍັງຈາກການສະແດງອອກຂອງທ່ານຄົນນີ້
ບໍ່ຫນ່ຳທີ່ທ່ານໃຊ້ລົດທາງການທີ່ມີປ້າຍໃຫ້ຕ້ອງສະອອນນຳພ້ອມທັງອົງຄະລັກຕິດຕາມມາອີກແລ້ວ
ບໍ່ຕ້ອງບອກອອກມາເປັນຄຳເວົ້າ ຂ້າລາຊການຊັ້ນຜູ່ນ້ອຍເຊັ່ນເຂົາຍ່ອມຮູ້ດີ

ເມື່ອບໍ່ເຫັນຄຳຫມັ້ນເວົ້າຫຍັງອອກມາ ບໍ່ພໍຍັງບໍ່ເອົາຕົວອອກໄປໃຫ້ໄກໆອີກ
ທ່ານຜູ່ບັງຄັບບັນຊາກອງພັນຈຶ່ງເຜີຍໃຫ້ເຫັນປືນສັ້ນທີ່ຕິດແອວຢູ່ໃຫ້ເຫັນກັນທຸກຄົນ
ຄຳຫມັ້ນກໍຮູ້ສຶກໆເປັນຢ້ານໆເພາະນີ້ມັນປືນຜາຫນ້າໄມ້ ບໍ່ແມ່ນຄຳເວົ້າຂົ່ມຂູ່ກັນທັມມະດາ
ຂືນເຮັດບໍ່ເຂົ້າທ່າ ດີບໍ່ດີກໍຕາຍຖິ້ມປານຫມູຫມາກາງຖນົນລ້າໆ
ແຕ່ເມື່ອເຫັນວອນວິໄລຜູ່ຊຶ່ງບໍ່ໄຫວຫວັ່ນຕໍ່ການຄຸກຄາມນັ້ນ ຄຳຫມັ້ນຜູ່ຊຶ່ງກໍຖືຕົນວ່າ

ເຮົາເປັນຜູ່ຊາຍກໍຕ້ອງເຂັ້ມແຂງກ່ວາຜູ່ຍິງ ຫລືຢ່າງຫນ້ອຍບໍ່ນ້ອຍໄປກ່ວາຜູ່ຍິງ
ເຂົາຈຶ່ງນັ່ງສເມີ້ຍເກີ້ຍ ເຮັດຄືບໍ່ຮູ້ຮ້ອນຮູ້ຫນາວນີ້ລະ

ທ່ານຜູ່ບັງຄັບບັນຊາກອງພັນຫມົດຫົນທາງທີ່ຈະໃຫ້ຄໍາຫມັ້ນຫອບຈ້ອງໄດ້
ທັງທີ່ມີປືນຂູ່ແລະອົງຄະລັກຢູ່ໃກ້ໆທີ່ຄອຍຮັບການສັ່ງການໃດໆນັ້ນ ທ່ານຈຶ່ງຫຸນຫັນປົບອອກໄປ
ແຕ່ກ່ອນທີ່ຈະຫາຍຫລັບໄປນັ້ນ ທ່ານກໍບໍ່ລືມທີ່ຈະສົ່ງສຽງຄໍາຣາມມາໃນເຮືອນວ່າ
“ວອນ ມາເທື່ອຫນ້າ ຢ່າໃຫ້ມີແນວນີ້ອີກ ບໍ່ຊັ້ນກໍຈະໄດ້ເຫັນດີກັນ”

ຄໍາຫມັ້ນໂລ່ງອົກໄປທີ່ບໍ່ຕ້ອງເອົາຊີວິດ ຫລືຮ່າງກາຍສ່ວນໃດສ່ວນນຶ່ງມາຖິ້ມຢູ່ທີ່ນີ້ລ້າໆ
ເຂົາບໍ່ແນ່ໃຈວ່າຖ້າເຫດການແບບນີ້ເກີດຂຶ້ນອີກໃນເທື່ອຫນ້າ
ເຂົາຈະຍັງຄົງກ້າຫານເປັນເຊັ່ນເກົ່າຫລືບໍ່?
ອາດຈະເປັນຍ້ອນເຫດການທີ່ເກີດຂຶ້ນຢ່າງສົດໆຮ້ອນໆກ່ຽວພັນໂດຍກົງກັບສິ່ງທີ່ເຮັດໃຫ້ວອນວິໄລ
ບໍ່ຄ່ອຍສະບາຍໃຈ ຄໍາຫມັ້ນຈຶ່ງໄດ້ຮຽນຮູ້ເຖິງເລື້ອງທີ່ເກີດຂຶ້ນໃນມື້ວານນີ້



ວອນວິໄລເລົ່າວ່າ ທ່ານຜູ່ບັງຄັບບັນຊາກອງພັນມາຫາ ຊຶ່ງກໍຄົງໄດ້ທີ່ຢູ່ຈາກພໍ່ແມ່ຂອງນາງ
ທໍາອິດຫັ້ນນາງເລົ່າວ່າ ທ່ານກໍມາດີໂດຍຮັບອາສາທີ່ຈະເປັນພາລະທຸກຢ່າງ
ໂດຍສະເພາະກໍແມ່ນກິຈກັມການຕໍ່າຫູກ ແລະທໍ່ຜ້າສົ່ງຂາຍຕ່າງປະເທດ
ທ່ານວ່າທ່ານມີເສັ້ນສາຍທີ່ສາມາດເຮັດໃຫ້ຄວາມຝັນຂອງນາງທີ່ຢາກມີກິຈກັມດັ່ງກ່າວ
ເປັນຈິງຂຶ້ນມາ ສິ່ງດຽວທີ່ທ່ານຂໍຄືນກໍຄືຄໍາຫມັ້ນສັນຍາທີ່ວ່າ ນາງຈະຍິນຍອມແຕ່ງງານກັບທ່ານ
ຊຶ່ງຖ້າຈະໃຫ້ດີແທ້ ທ່ານຢາກຈະຂໍຫມັ້ນນາງເອົາໄວ້ກ່ອນໄວເທົ່າໃດກໍແຮ່ງດີ
ເມື່ອບໍ່ສາມາດຄາດຄັ້ນເອົາຄໍາຕອບຈາກນາງໄດ້ ໃນທີ່ສຸດທ່ານກໍສະແດງທາດແທ້ຂອງທ່ານອອກ

ໂດຍຊູ່ເຖິງຄວາມປອດໄພຂອງຄອບຄົວນາງ ນ້ອງສາວທີ່ບໍຣິສຸດຂອງນາງ
ແລະເຫນືອສິ່ງອື່ນໃດຫມົດກໍຄືຄວາມປອດໄພຂອງອິສຣະ ຊຶ່ງບໍ່ຮູ້ອີໂນ່ອີເນ່ຫຍັງເລີຍນໍານັ້ນ

ຄໍາຫມັ້ນໄດ້ຍິນແລ້ວ ກໍບໍ່ຢາກເຊື່ອວ່າ ສິ່ງດັ່ງກ່າວຈະເກີດຂຶ້ນໃນບ້ານເມືອງທີ່ມີຂື່ມີແປນີ້
ແຕ່ເຂົາກໍບໍ່ປົງໃຈໄດ້ວ່າ ສິ່ງດັ່ງກ່າວຈະບໍ່ເກີດຂຶ້ນໄດ້
ແນວອໍານາດເມື່ອຕົກຢູ່ໃນກໍາມືຂອງຜູ່ທີ່ບໍ່ມີສິລທັມປະຈໍາໃຈແລ້ວ
ມັນກໍເປັນສິ່ງຫນ້າອັນຕລາຍຢ່າງຍິ່ງ
ແລະຍິ່ງເມື່ອມາປະກອບກັບເລື້ອງຄວາມກໍາຫນັດດ້ານຊູ້ສາວແລ້ວ
ແມ້ນແຕ່ຜູ່ທີ່ມີປັນຍາກໍຍັງອາດພາດພັ້ງໄດ້
ນີ້ແຕ່ບໍ່ຕ້ອງເວົ້າເຖິງຜູ່ທີ່ມີອໍານາດແຕ່ຫາກຂາດຊຶ່ງປັນຍານັ້ນເລີຍ

ກ່ອນຈະອໍາລາພາຈາກນາງກັບໄປເຮັດວຽກເຮັດການນັ້ນ *ຄໍາຫມັ້ນໄດ້ບອກນາງວ່າ*
*ຄວນທີ່ນາງຈະເຮັດຕາມສິ່ງທີ່ຫົວໃຈຂອງນາງຮຽກຮ້ອງຕ້ອງການ ບໍ່ແມ່ນສິ່ງທີ່ນາງຕ້ອງຝືນ*
*ກໍດັ່ງທີ່ເຂົາຈະມີຄວາມສຸກ ກໍເພາະຄົນທີ່ເຂົາຮັກມີຄວາມສຸກເທົ່ານັ້ນ*
*ອັນເລື້ອງເງິນຂອງຫລືສິ່ງຕ່າງໆນັ້ນເປັນຂອງຫາໄດ້*
*ແລະມັນກໍບໍ່ແມ່ນເຄົ້າຫນໍ່ຂອງຄວາມສຸກໃນຕົວຂອງມັນເອງ*
*ກົງກັນຂ້າມມັນກັບແມ່ນຈິດໃຈຂອງຄົນເຮົາທີ່ວ່ານັ້ນນີ້ເປັນຄວາມສຸກຫລືບໍ່?*
*ໂດຍບໍ່ຈໍາແນກວ່າສິ່ງດັ່ງກ່າວຈະໄຮ້ຄ່າໃນສາຍຕາຂອງຄົນທົ່ວໄປກໍຕາມ*
*ຄໍາຫມັ້ນຮູ້ວ່າຄວາມຄິດເຫັນດັ່ງກ່າວຂອງເຂົາບໍ່ອາດກວມລວມໄປເຖິງຄວາມຫມັ້ນໃຈ*
*ໃນຄວາມປອດໄພຂອງຄົນທີ່ວອນວິໄລຮັກໄດ້ ແຕ່ຢ່າງຫນ້ອຍນາງກໍຈະພໍເຫັນວ່າ*
*ເມື່ອນາງບໍ່ຍອມອ່ອນຂໍ້ໃຫ້ຫມູ່ມານ ມັນກໍຕ້ອງປາໄຊໄປເອງ ແຕ່ຈະປາໄຊແບບໃດນັ້ນ*
*ຟ້າດິນເທົ່ານັ້ນຈະເປັນຜູ່ບອກນາງໄດ້ດີກ່ວາ*

ວອນວິໄລແນມນໍາຫລັງລົດໂມໂຕໄຊຂອງຄໍາຫມັ້ນທີ່ກໍາລັງຈະຫາຍຫລັບໄປຈາກສາຍຕາ
ພ້ອມດ້ວຍລົມຫາຍໃຈທີ່ຍັງບໍ່ທັນມີຄໍາຕອບໃຫ້...



*****

*ຖ້າເຈົ້າໜາວ ຂ້ອຍຈະແກ້ເສື້ອກັນໜາວອອກໃຫ້ເຈົ້າໃສ່*
*ເຖິງການກະທຳນັ້ນຂ້ອຍຈະໜາວຕາຍກໍຕາມ*
*ເພາະນັ້ນຄືຄວາມເປັນມະນຸສທັມທີ່ຊ່ອຍໃຫ້ຂ້ອຍເປັນຄົນທີ່ແນມເບິ່ງດວງຕາຂອງເດັກນ້ອຍຜູ່ຂາດເ*
*ຂີນຢ່າງບໍ່ຍອມຫລົບສາຍຕາວ່າ ອັນຊີວິດຂ້ອຍໄດ້ມອບໃຫ້ແລ້ວເພື່ອຜູ່ຄົນທີ່ຂ້ອຍຮັກ*
*ອັນສເມີດ້ານຫລືຍິ່ງກ່ວາຊີວິດຂອງຂ້ອຍເອງ*

## ງ. ຮ່ວມແຮງຮ່ວມໃຈ

ນັບຕັ້ງແຕ່ແຈຣີເຊົາມາວົນວຽນກັບການໄປການມາຂອງນາງ ວຽງປະພາຊຶ່ງນັບວ່າເປັນຄົນໃໝ່ ເພາະໄຊຊະນະອັນນ້ອຍໆທີ່ມີຢູ່ເໜືອແຈຣີນັ້ນ ເຮັດໃຫ້ນາງໝັ້ນໃຈວ່າ ນາງນັ້ນມີຄວາມເຂັ້ມແຂງທີ່ຈະຜ່າຟັ່ນຊີວິດດ້ວຍຕົວຂອງນາງເອງ ຊຶ່ງນັ້ນກໍໝາຍຄວາມວ່າ ສິ່ງໃດທີ່ນາງເຫັນວ່າ ນັ້ນເປັນສິ່ງທີ່ດີຊອບ ນາງຈະເຮັດໄປໂດຍບໍ່ຕ້ອງຫວາດຫວັ່ນກັບອຸປສັກສິ່ງທີ່ຂວາງກັ້ນໃດໆທັງສິ້ນ ມາວັນນີ້ ນາງໄດ້ເອົາເວລາຊຶ່ງແຕ່ກ່ອນຈະໃຊ້ໄປຊຸມແຊວກັບໝູ່ກອງ ຫລືບໍ່ກໍໄປໂບດທັງທີ່ນາງບໍ່ເຊື່ອຖືນຳໝູ່ຊື່ໆ ມາຊ່ອຍສອນພາສາລາວໃຫ້ເດັກນ້ອຍລາວຢູ່ວັດ ທັງນັ້ນທັງນີ້ກໍເພື່ອວ່າບາດເຂົາເຈົ້າໄດ້ມີໂອກາດກັບໄປຢ້ຽມຢາມຖິ່ນຖານຂອງພໍ່ແມ່ ເຂົາເຈົ້າຈະໄດ້ເຂົ້າໃຈພາສາທີ່ປາກເວົ້ານັ້ນ



ຫລາຍເທື່ອຫມູ່ກອງຍອກລໍ້ວ່າ ບໍ່ແມ່ນໄປຕິດແນວຄິດປະຕິວັດມາແຕ່ເມືອງລາວບໍ່
ຈຶ່ງກາຍເປັນຄົນທີ່ອຸທິດຕົວໃຫ້ຄົນອື່ນແບບນີ້?
ວຽງປະພາຫລາຍເທື່ອກໍຄັນປາກຢາກຈະຕອບຄືນວ່າ
ອັນສິ່ງທີ່ຫມູ່ຄູ່ຜູ່ບໍ່ເຄີຍໄປຢາມເມືອງລາວມາກ່ອນ ເວົ້າມານັ້ນ ມັນໄກຈາກຄວາມຈິງຫລາຍ
ການປະຕິວັດນັ້ນບໍ່ແມ່ນພຽງຈາກປື້ມສໍທີ່ໄຮ້ຄວາມຈິງທັ່ງເທກັນອອກມາເປັນລົມປາກຊື່ໆ
ແຕ່ຫາກແມ່ນຢູ່ທີ່ຈິດໃຈຢາກເຫັນການປ່ຽນແປງທີ່ດີຂຶ້ນ ແລະທີ່ຍຸຕິທັມນັ້ນຕ່າງຫາກ
ແຕ່ກໍຈັກຊິໄປຕອບຫມູ່ກອງແນວນັ້ນເພື່ອຜົນປໂຍດອັນໃດ ເພາະຄວາມຮັບຮູ້ຂອງຄົນນຶ່ງໆນັ້ນ
ບໍ່ແມ່ນຈະໄດ້ມາໂດຍງ່າຍ ມັນຕ້ອງຜ່ານຄວາມເຂົ້າໃຈແລະການສແວງຫາຄວາມຈິງ
ຊຶ່ງຈະກໍ່ເກີດໃຫ້ມີໄດ້ກໍຕໍ່ເມື່ອສິ່ງດັ່ງກ່າວມາຈາກຈິດວິນຍານຂອງຄົນໆນັ້ນເອງ

ຍິ່ງວຽງປະພາຄິດເຖິງຄວາມຈິງຂໍ້ນີ້ຫລາຍປານໃດ ນາງກໍຍິ່ງຕະຫນັກວ່າ
ອຸດົມການຂອງອິສຣະໄດ້ເຂົ້າມາຝັງຕົວຢູ່ໃນຕົວນາງຢ່າງແກະບໍ່ອອກ ນາງຢາກຈະວ່າ
ນີ້ບໍ່ແມ່ນອິດທິພົນຂອງເຂົາ ເພາະເຂົາແລະນາງບໍ່ມີສິ່ງໃດຮ່ວມກັນອີກແລ້ວ
ແຕ່ນາງກໍບໍ່ອາດປະຕິເສດໄດ້ວ່າ ເຂົາເປັນເຄົ້າຫນໍ່ໃຫ້ນາງໄດ້ຫລຽວເຫັນຊີວິດ
ທີ່ຄັ້ງນຶ່ງເຄີຍຫມົກຫມຸ່ນຢູ່ກັບຕົວເອງ ປານນຶ່ງວ່າ ຊີວິດກໍມີພຽງເທົ່ານີ້ ແລະກໍຈາກອິສຣະ
ນາງຈຶ່ງພໍຮູ້ວ່າ ເປັນຫຍັງພໍ່ຂອງນາງຈຶ່ງບໍ່ຍອມຫນີອອກຈາກບ້ານເກີດເມືອງນອນ
ທັງທີ່ຍັງມີໂອກາດໃຫ້? ແລະຫາກນາງໄດ້ພຽງສ່ວນນຶ່ງຂອງພໍ່ນາງແທ້
ນາງກໍຕ້ອງຍັງຄົງໄວ້ຊຶ່ງສາຍສັມພັນທີ່ພໍ່ຂອງນາງມີຕໍ່ຜູ່ຄົນແລະຊາດບ້ານເມືອງທີ່ຈາກມາ



ດັ່ງນັ້ນຈຶ່ງບໍ່ແປກເມື່ອບຸນມີມາບອກນາງວ່າ
ເຂົາຈະເປັນເຈົ້າກີ້ເຈົ້າການຊອກຫາທຶນຮອນໄປຊ່ອຍສ້າງໂຮງຮຽນທີ່ອິສຣະ
ຫມາຍຫມັ້ນ ໃຫ້ເກີດມີຂຶ້ນມານັ້ນ ນາງຈຶ່ງກາຍເປັນອີກມືນຶ່ງ
ທີ່ແຂງຂັນເພື່ອງານນີ້ ງານທີ່ເຮັດໃຫ້ນາງເຫັນຄຸນຄ່າຂອງຊີວິດ
ທີ່ມອບໃຫ້ແກ່ຜູ່ຄົນທີ່ດ້ອຍໂອກາດກ່ວາຕົນທາງດ້ານການສຶກສານີ້

ແມ່ພາຜູ່ຊຶ່ງມາຊ່ອຍລູກຢູ່ໂຕະຮັບຕ້ອນຫນ້າງານຫາຣາຍໄດ້ໃຫ້ແກ່ກອງທຶນ
ສ້າງໂຮງຮຽນຢູ່ລາວ ສົ່ງສາຍຕາອັນສຸດແສນທີ່ຈະຊົມຊື່ນໄປຍັງລູກສາວທີ່ກໍາລັງແລ່ນວຽກ
ເປັນສົລວົນເພື່ອໃຫ້ງານນີ້ ແລ່ນໄປໂດຍສະດວກແລະກໍມີຫມາກຜົນ ແມ່ຮູ້ວ່າ

ຫລາຍຄົນຄົງຈະບໍ່ເຂົ້າໃຈລູກ ຄິດວ່າລູກເປັນຫົວອ້າຍນ້ອງໄປແລ້ວ
ຊຶ່ງນັ້ນໄກຈາກຄວາມຈິງຫລາຍ ແມ່ຍັງຕະຫນັກວ່າ
ຄວາມເຫັນອົກເຫັນໃຈຜູ່ອື່ນຄືສິ່ງທີ່ແມ່ຕ້ອງການເປັນຢ່າງຍິ່ງຈາກລູກສາວ ເພາະນັ້ນກໍເທົ່າກັບວ່າ
ລູກບໍ່ເສັງທີທີ່ເກີດມາເປັນມະນຸດ ຊຶ່ງຖ້າຈະຕ່າງຄວາມເປັນສັດກໍພຽງ
ຄວາມສູງສົ່ງທາງດ້ານຈິດໃຈເທົ່ານັ້ນ

---

"ເຮີ້ຍ ອິສຣະ ເຮົາວ່າຢຸດພັກຜ່ອນກ່ອນ ເອົາໄວ້ແດດລົງໆກ່ອນແລ້ວ ຈັ່ງສືບຕໍ່ມຸງຫລັງຄາໃຫມ່"
ສຽງຂອງຄຳຫມັ້ນດັງຂຶ້ນຈາກຂ້າງລຸ່ມໃນຂະນະທີ່ເຂົາເຊົາຕອກຝາແລ້ວ
ຄຳຫມັ້ນເອງໃນເມື່ອກ່ອນກໍວ່າ ບໍ່ຢາກມີສ່ວນຮ່ວມສ້າງກັບຄູ່ແຂ່ງຂອງເຂົາ
ແຕ່ເມື່ອເຫັນວອນວິໄລຂໍຮ້ອງໃຫ້ຊ່ວຍຢ່າງຫນ້ອຍກໍເພື່ອເຫັນແກ່ນາງ
ເຂົາຈຶ່ງມາຊ່ວຍໃນວັນເສົາຫລືວັນທິດ *ເອົາເປັນວ່າ ທຳອິດກໍເພາະຜູ້ງບໍ່ໄດ້ຊື່ງ
ແຕ່ບາດໄດ້ມາເຫັນຄວາມເອົາຈິງເອົາຈັງຂອງຜູ່ຄົນທີ່ຖືວຽກການສ້າງໂຮງຮຽນສເມີດ້ານວຽກງານ
ຂອງຕົນ ຫລືຍິ່ງກ່ວາວຽກງານປະຈຳຂອງຕົນອີກດ້ວຍ
ກຽດສັກສີຂອງການທະນົງຕົວທີ່ຄັ້ງນຶ່ງຄຳຫມັ້ນເຄີຍມີແລະກໍເຄີຍຫວັງໃຫ້ນຳລະບອບໃຫມ່ນີ້
ກໍຄືນມາສູ່ເຂົາອີກ* ດັ່ງນັ້ນພໍແຕ່ແລ້ວວຽກງານປະຈຳໃນແຕ່ລະມື້
ນະທີ່ປຸກສ້າງໂຮງຮຽນນີ້ກໍມີເຂົາຮ່ວມຢ່າງແຂງຂັນຢູ່ໃນນັ້ນດ້ວຍ



"ກະຄິດແນວນັ້ນຄືກັນ ບ່າຍມື້ນີ້ອາກາດຮ້ອນຜິດປົກກະຕິ ພວກນັກຮຽນທີ່ມາຊ່ອຍນີ້
ເບິ່ງເຫັນເຂົາເຈົ້າເຫື່ອໄຫລຍືດຍ້ອຍຫນ້າຜາກລົງໄປຕາມໆກັນ"

ອິສຣະຜູ້ຊຶ່ງເຖິງຢາກຈະປຸກສ້າງໂຮງຮຽນໃຫ້ມັນແລ້ວໆ ໄວເທົ່າໃດຍິ່ງດີ
ກໍອິດເປັນຫ່ວງພວກນັກຮຽນວັດທີ່ຕັ້ງຫນ້າກັນມາຊ່ອຍເຂົາເປັນການຕອບບຸນແທນຄຸນ
ທີ່ເຂົາສອນຊ່ອຍສອນເລກແລະພາສາອັງກິດໃຫ້ຟຣີນັ້ນ
"ເອົາທໍ່ນີ້ກ່ອນນໍມື້ນີ້ ເອົາໄວ້ແດດຕົກແລ້ວ ຫລືບໍ່ຊັ່ນກໍມື້ຫນ້າ ຈັ່ງມາພາກັນເຮັດຕໍ່"
ອິສຣະສັ່ງການໃຫ້ຜູ້ອາສາສມັກທັງຫລາຍເຊົາວຽກງານທີ່ກໍາລັງເຮັດຢູ່ນັ້ນ
ແຕ່ເຖິງຢ່າງໃດກໍດີ ສຽງຄ້ອນຕີ ສຽງສັງກະສີທີ່ວາງປູລົງຫລັງຄາໂຮງຮຽນຫລັງໃຫມ່
ກໍຍັງດໍາເນີນໄປຢູ່ດີ
"ພວກນ້ອງຍັງບໍ່ທັນຢາກເຊົາເທື່ອ ເອົາໄວ້ມຸງຫລັງຄາແລ້ວ ພວກນ້ອງຈັ່ງຊິເຊົາ"
ນໍ້າສຽງອັນແຂງຂັນດັງຂຶ້ນຈາກພາກສ່ວນມຸງຫລັງຄາ
ອັນເຮັດໃຫ້ພາກສ່ວນເຮັດຝາໂຮງຮຽນຊຶ່ງກໍບໍ່ຍອມເສັຽຫນ້າຮ້ອງຂຶ້ນວ່າ
"ຖ້າຝາໂຮງຮຽນບໍ່ແລ້ວ ພວກເຮົາກໍບໍ່ຍອມເຊົາຄືກັນ"

ເອົາເປັນອັນວ່າ ສຽງສ່ວນຫລາຍບໍ່ຍອມໃຫ້ເຊົາ ການປຸກສ້າງໂຮງຮຽນຈຶ່ງດໍາເນີນຕໍ່ໄປ
ຈົນຮອດຄ້າຍຄໍ່າ ແລະກ່ອນຈະເລີກລາກັນໄປນັ້ນ ມີຈໍານວນບໍ່ຫນ້ອຍກໍວ່າ
ມື້ອື່ນນີ້ພວກຕົນກໍຈະມາອອກແຮງງານຮ່ວມປຸກສ້າງໂຮງຮຽນຕໍ່
ອິສຣະກໍໄດ້ແຕ່ຂອບໃຈໃນການເສັຽສລະຂອງເຂົາເຫລົ່ານັ້ນ
ເພາະເງິນແຕ່ລະກີບທີ່ໄດ້ມາແມ່ນເອົາໄປໃຊ້ຊື້ອຸປກອນການປຸກສ້າງໂຮງຮຽນຫມົດ
ດັ່ງນັ້ນຄ່າຈ້າງອອກແຮງງານຈຶ່ງບໍ່ອາດມີເຫລືອໃຫ້ຜູ້ໃດໄດ້
ທຸກຄົນທີ່ມາຊ່ອຍຕ່າງກໍຕະຫນັກໃນສິ່ງດັ່ງກ່າວໄດ້ດີ
ແຕ່ເຖິງຈະຂາດເຂີນສິນຈ້າງລາງວັນເປັນການຕອບແທນ ຜູ້ຄົນທີ່ມາຊ່ອຍນັ້ນກໍມາກັນຈາກທຸກທິບ
ຈາກຄົນທີ່ອິສຣະເຄີຍຮ່ວມງານແລະເຫັນໄດ້ຊຶ່ງສິ່ງທີ່ເຂົາຕ້ອງການສ້າງຂຶ້ນມານັ້ນ
ຈາກນັກຮຽນໂຮງຮຽນເອກຊົນທີ່ມີອະພິສິດໃນດ້ານເງິນຄໍາແຕ່ໄຮ້ຫລັກຫມັ້ນຈຸດເດີນຂອງຊີວິດ
ຈາກແວດວົງຂອງວອນວິໄລຊຶ່ງປະກອບດ້ວຍເພື່ອນໆຂອງນ້ອງສາວນາງ
ທີ່ຢາກຈະສັມຜັດກັບຊີວິດຈິງເພື່ອຈະເຫັນໄດ້ເຖິງພາລະຫນ້າທີ່ທີ່ຕົນເອງຈະເປັນຜູ້ກໍາ
ໃນວັນຂ້າງຫນ້າ ແລະກໍເຫນືອສິ່ງອື່ນໃດຫມົດ
ກໍຈາກກອງເງິນທຶນຊຶ່ງເພື່ອນຝູງໃນຕ່າງປະເທດຊອກຫາມາໃຫ້ ນໍ້າຈິດນໍ້າໃຈເຫລົ່ານີ້
ທຸກຄົນທີ່ມີສ່ວນຮ່ວມສ້າງໃນສິ່ງທີ່ຕົນພໍມີໃຫ້ໄດ້ຕ່າງກໍບອກອິສຣະໄປວ່າ
ກະວີທີ່ເຂົາຂຽນຂຶ້ນນັ້ນເປັນດັ່ງແມ່ແຮງໃຫ້ທຸກຄົນໄດ້ຫລຽວເຫັນເຖິງຄວາມຈິງຂອງຊີວິດ
ທີ່ຕ່າງກໍເພິ່ງພາອາໃສກັນ ແລ້ວຊີວິດຈຶ່ງຈະກາຍເປັນຊີວິດທີ່ແທ້ຈິງ

ພາຍຫລັງທີ່ຜູ່ຄົນຕ່າງກໍພາກັນກັບໄປສູ່ເຄຫັງຂອງຕົນແລ້ວ
ອິສຣະກໍຈັບເອົາເຈັ້ງໃບນ້ອຍທີ່ເຂົາຂຽນກະວີບົດນັ້ນຂຶ້ນມາອ່ານອີກຄັ້ງ
ຄົງຈະມີແຕ່ກະວີເອງທີ່ຈະບອກຜູ່ອ່ານໄດ້ວ່າ
ແມ່ນຫຍັງກັນແທ້ທີ່ກາຍເປັນແຮງດົນໃຈໃຫ້ມີການຮ່ວມແຮງຮ່ວມໃຈດັ່ງສາຍທາລາ
ທີ່ບໍ່ມີວັນຮູ້ຈັກເຂີນຂາດນີ້



## ເສັ້ນທາງຊີວິດ

ຊີວິດຄົນເຮົາ
ຄືກັບເສັ້ນທາງທີ່ເລາະລຽບໄປຕາມຮ່ອມພູ
ບາງຄັ້ງສູງຊັນຫນ້າໃຈຫາຍ
ບາງຄັ້ງງົດງາມຫນ້າປະທັບໃຈ
ບໍ່ມີໃຜອາດຈະຄາດຄະເນໄດ້ວ່າ
ທາງຂ້າງຫນ້າຈະເປັນແນວໃດ

ສິ່ງທີ່ບໍ່ຂາດຝັນອາດຈະເກີດຂຶ້ນໄດ້ທຸກເວລາ
ຫິມະອາດຈະໂປຍລົງມາ
ຟ້າຝົນອາດຈະກະຫນ່ຳ
ແລະແສງແດດອາດຈະເຜົາຜານ

ດ້ວຍວ່າຊີວິດນີ້ສັ້ນ
ຮັກກັນໄວ້ນັ້ນລະດີກ່ວາ
ທຳຄວາມດີໄວ້ນັ້ນບໍ່ມີວັນເສັ້ຽຫາຍ
ເພາະເຖິງເວລາທີ່ເຮົາຈະພາກຈາກກັນ
ໃນຊ່ວງນຶ່ງຂອງຄວາມຄິດ

ໃນວູບນຶ່ງຂອງຄວາມຊົງຈຳ
ຈະໄດ້ລະນຶກວ່າ

ຊີວິດເຮົານີ້ໄດ້ມອບໃຫ້ແລ້ວ
ເພື່ອສິ່ງທີ່ດີງາມ
ເພື່ອຄົນທີ່ເຮົາຮັກ
ແລະເພື່ອຄົນທີ່ຮັກເຮົາ

## ໗. ວອນວິໄລກັບການປຸກສ້າງໂຮງຮຽນ

ແລງມື້ນີ້ ວອນວິໄລບໍ່ໄດ້ມີພັງນເຮັດວຽກໃນຕອນກາງຄືນ ດັ່ງນັ້ນທັນທີທີ່ເລີກວຽກໃນຕອນບ່າຍ
ນາງຈຶ່ງມຸ່ງມາຫາບ່ອນທີ່ກຳລັງມີການປຸກສ້າງໂຮງຮຽນໃນທັນໃດ ນາງຮູ້ຢູ່ວ່າ ຖ້າມາຍາມນີ້
ກໍຄົງຈະບໍ່ໄດ້ຊ່ອຍຫຍັງຫລາຍ ເພາະຈັກໜ້ອຍອີກບໍ່ດົນແດດກໍຈະຕົກໝົດແລ້ວ
ແລະອີກບໍ່ດົນຟ້າມືດຄ່ຳກໍຈະເຂົ້າມາປົກຄຸມ
ຊຶ່ງນັ້ນກໍຄືໃກ້ຈະຮອດຍາມເລີກລາການປຸກສ້າງໂຮງຮຽນຂອງມື້ນັ້ນ ແຕ່ເຖິງຢ່າງໃດກໍດີ
ນາງກໍຄິດວ່າ ມັນຍັງດີກ່ວາທີ່ຈະບໍ່ໄດ້ມາຮ່ວມປຸກສ້າງໂຮງຮຽນໃນແຕ່ລະມື້ເລີຍ
ອີກຢ່າງຕັ້ງແຕ່ມີລົດຈັກຂີ່ເປັນຂອງຕົນເອງ
ຊຶ່ງນັ້ນກໍຄືບໍ່ຕ້ອງໄດ້ໃຫ້ອິສຣະໄດ້ມາຮັບສົ່ງນາງຢ່າງເປັນປະຈຳ
ອັນເໜມາະສົມກັບວຽກງານທີ່ຖົມໜ້າເຂົາຢູ່
ດັ່ງນັ້ນນາງຈຶ່ງມາບ່ອນປຸກສ້າງໂຮງຮຽນໄດ້ຕາມທີ່ຫົວໃຈຂອງນາງຮຽກຮ້ອງຕ້ອງການ

ທຳອິດທັ້ນ ນາງເອງບໍ່ຊົງຫ້າວຫັນກັບວຽກງານພິເສດນີ້
ເພາະແຕ່ລະມື້ກັບມາແຕ່ເຮັດວຽກທີ່ຮ້ານກິນດື່ມກໍເມື່ອຍຫາຍໃຈເປັນຫອບໆແລ້ວ
ອີກຢ່າງກໍອົດຄິດບໍ່ໄດ້ວ່າ ນັບຕັ້ງແຕ່ມີລົດຈັກຂີ່ເປັນຂອງຕົນເອງ
ນາງກໍບໍ່ຄ່ອຍໄດ້ເຫັນໜ້າອິສຣະຢ່າງເປັນປະຈຳປານໃດ
ດັ່ງນັ້ນມັນຈຶ່ງຮູ້ສຶກເປັນເມື່ອຍໆໜັກເຂົ້າໄປກ່ວາເກົ່າອີກ
ແຕ່ເມື່ອມາເຫັນທຸກຄົນທີ່ມີສ່ວນກ່ຽວຂ້ອງໃນການປຸກສ້າງໂຮງຮຽນນີ້ທຸ່ມທັງກາຍແລະໃຈໃຫ້
ໂດຍສະເພາະກໍແມ່ນຄຳໝັ້ນແລະມະນີຊຶ່ງປານວ່າຢູ່ຄົນລະຄ້າຍຂອງຄວາມນຶກຄິດກັບອິສຣະ
ປົກເວລາທີ່ໃຫ້ກັບວຽກນີ້ ຄວາມອິດເມື່ອຍທີ່ວ່າຈະລົ້ມລົງໄດ້ໃນທຸກຍາມ ກໍກັບກາຍເປັນພໍສູ້ທົນໄດ້
ແລະຍິ່ງກ່ວາສິ່ງອື່ນໃດໝົດກໍແມ່ນວ່າ ສຳຫລັບມື້ວັນເສົາວັນທີດນີ້

ທຸກຄັ້ງທີ່ນາງໄປຮອດໄປເຖິງສຖານທີ່ ກໍມີອິສຣະໃຫ້ເຫັນພໍໃຫ້ຫາຍເມື່ອຍ
ບໍ່ຕ່າງຫຍັງກັບທີ່ໄດ້ກິນນ້ຳເຢັນໆຫລັງຈາກການເດີນທາງອັນຍາວໄກນັ້ນເອງ



ສິ່ງແຮກທີ່ວອນວິໄລພົບພໍ້ເມື່ອໄປຮອດໄປເຖິງກໍຄື
ອິສຣະພວມກຳລັງມຸງຫລັງຄາຂອງໂຮງຮຽນຢ່າງສາຣະວົນ ແຕ່ກໍເຫມືອນດັ່ງມີສັນຍານອັນລຶກລັບ
ມັນກໍເຮັດໃຫ້ສາຍຕາຂອງອິສຣະກະຈອນມາສູ່ບ່ອນທີ່ນາງກຳລັງຈອດລົດຈັກຢູ່
ໃນທັນໃດດວງຕາທັງສອງຄູ່ກໍປະສານກັນ ອັນເຮັດໃຫ້ຜູ່ຄົນທີ່ມາຊ່ອຍປຸກສ້າງໂຮງຮຽນ
ຕ່າງກໍວິດແວດ ສົ່ງສຽງເຮຮາຢ່າງຖືກໃຈ ແລະສຽງຍິ້ມຫົວກໍດັງເປັນພິເສດຈາກພາກສ່ວນ
ມຸງຫລັງຄາທີ່ມີຫນຸ່ມນ້ອຍຜູ່ຫ້າວຫັນ ແລະຄະນອງໃນຄວາມຮັກດ້ວຍກັນທັງນັ້ນ



“ມົວແຕ່ວິດແວດຢູ່ນັ້ນລະ ຈັກຫນ້ອຍບາດມີດມາ ມຸງຫລັງຄາກະຊິບໍ່ແລ້ວເປັນຈັກເທື່ອ”
ອິສຣະກ່າວເປັນສຽງຕຳນິພໍໃຫ້ຄືວ່າຊື່ໆ ເຂົາຮູ້ດີວ່າ
ຫນຸ່ມນ້ອຍພວກນີ້ຕ່າງກໍເຊັ່ງເຂົາຢ່າງເຕັມທີ່ຕໍ່ກັບວອນວິໄລ ສາວງາມ

ຜູ່ຊຶ່ງເຂົາເຈົ້າຈະເຫັນຫນ້ານາງເກືອບວ່າທຸກມື້ ເຂົາເອງກໍບໍ່ແນ່ນວ່າ
ຈະບໍ່ເຫັນໃນຄວາມມືສເນ່ຂອງນາງ
ຊຶ່ງບາງຄັ້ງເຂົາກໍອົດຢາກທີ່ຈະເອົານາງມາຢູ່ອ້ອມກອດຂອງເຂົາບໍ່ໄດ້ ແຕ່ໃນຂະນະດຽວກັນ
ພ້ອມກັບພາບຂອງວອນວິໄລນັ້ນກໍມີພາບຂອງວຽງປະພາຊຸກຊ້ອນຂຶ້ນມາໃຫ້ເຂົາ
ຕ້ອງໄດ້ຢຸດຍັ້ງໃຈເອົາໄວ້ໃນທີ່ສຸດ

ຫລັງຈາກທີ່ຫລັງຄາໃບສຸດທ້າຍຖືກວາງລົງ ອິສຣະກໍຢ່ອນຕົວລົງມາ
ທັນທີທີ່ເຂົາຢຽບຢ່າງລົງເທິງດິນ
ຜ້າເຊັດຫນ້າຜືນນ້ອຍໆກໍຖືກເດ່ນມາຊັບເອົາຢາດເຫື່ອທີ່ຍັງຄົງຄ້າງຄາຢູ່ເທິງໃບຫນ້າຂອງເຂົາອອກ
ແລະກໍພ້ອມກັບຜ້າເຊັດຫນ້າຜືນນັ້ນ
ຮອຍຍີ້ມອັນຫວານຣະຣື່ນໃຈຂອງວອນວິໄລກໍເບ່ງບານອອກຈາກຣີມຝີປາກທີ່ຊວນໃຫ້ດູດດົມແລະ
ລູບໄລ້ຂອງນາງ ແລະໃນທ່າມກາງພາບທີ່ແສນຈະຊວນໃຫ້ເພີ້ຝັນນັ້ນ
ອິສຣະກໍເດ່ມືຂອງເຂົາໄປບັບຈັບແນບໄວ້ກັບຜ້າເຊັດຫນ້າທີ່ມີມືຂອງວອນວິໄລຄຸກຄີຢູ່ນັ້ນດ້ວຍ
ແນ່ນອນວ່າ ວອນວິໄລຜູ່ຊຶ່ງບໍ່ນຶກຝັນວ່າ ອິສຣະຈະສະແດງອອກຊຶ່ງຄວາມໃນໃຈ
ທີ່ເຂົາມີຕໍ່ນາງຢ່າງໂຈ່ງແຈ້ງຕໍ່ຫນ້າຫລາຍຄູ່ຫລາຍຄົນເຊັ່ນນີ້
ໃບຫນ້າຂອງນາງຈຶ່ງຣະເຣື່ອທັງດ້ວຍຄວາມອາຍແລະທັງດ້ວຍຄວາມປິຕິຊົມຊື່ນ
ຢ່າງຫາອັນປຽບບໍ່ໄດ້ ອິສຣະເອງທັນທີທີ່ຮູ້ສຶກຕົວໄດ້ວ່າ ເຂົາກຳລັງເຮັດຫຍັງລົງໄປ
ເຂົາກໍຫນ້າແດງຄືກັນ ແນວສາຍຕາຫລາຍຄູ່ຕ່າງກໍຈັບຈ້ອງມາທາງເຂົາແລະວອນວິໄລເປັນຈຸດດຽວ
ເຂົາຮູ້ວ່າ ສາຍຕາເຫລົ່ານັ້ນລ້ວນເປັນສາຍຕາແຫ່ງຄວາມເຂົ້າໃຈແລະຊື່ນຊົມ ເພາະໃນທີ່ສຸດ
ເຂົາກໍຈະໄດ້ຝັງຮາກໄວ້ກັບຜືນແຜ່ນດິນຕອນນີ້ແລະກໍກັບຍິງສາວທີ່ດິນແດນດອກຈຳປາມີມອບໃຫ້
ຢ່າງສຸດແສນທີ່ຈະພາກພູມ



*ໃນຂະນະທີ່ອິສຣະພວມງຶງງັບຕົວເອງທີ່ບັງອາດຖືກຕ້ອງມືຂ
ອງວອນວິໄລຢູ່ຕໍ່ຫນ້າຊຸມຊົນນີ້
ວອນວິໄລກໍໄດ້ແຕ່ປາບປື້ມໃຈທີ່ຕະຫນັກເປັນຄັ້ງແຣກວ່າ
ອິສຣະນັ້ນຮັກນາງຢ່າງສຸດຊຶ້ງ
ການສະແດງອອກເລັກໆນ້ອຍໆຂອງເຂົານີ້
ລ້ວນເປັນສັກຂີພະຍານວ່າ ເຂົາຮັກນາງຫລາຍພຽງໃດ*

*ນີ້ຫາກເຂົາບໍ່ມີວຽງປະພາຢູ່ໃນດວງໃຈມາກ່ອນ*
*ແລະທີ່ເຂົາຕ້ອງສູ້ຊົນກັບຄວາມຊື່ສັດຕໍ່ຄວາມຮັກຄັ້ງແຮກນັ້ນ*
*ຕົວນ້ອຍໆຂອງນາງຄົງຈະບໍ່ອາດສາມາດຮັບໄດ້ເຖິງຄວາມຮັກອັນຍິ່ງໃຫຍ່*
*ແລະມະຫາສານຂອງເຂົາ ຊຶ່ງຈະປຽບກໍບໍ່ຕ່າງຫຍັງກະແສນໍ້າໃນຍາມລະດູຝົນ*
*ທີ່ຫັ່ງມາເທມາຢ່າງບໍ່ຂາດສາຍ*

ພ້ອມກັບຄວາມຮັບຮູ້ໃຫມ່ນີ້ ວອນວິໄລກໍຕະຫນັກວ່າ
ອັນຄວາມສຸກນີ້ບໍ່ຈຳເປັນຕ້ອງມີຄົນທີ່ເຮົາຮັກມາຕາມໃຈເຮົາ ຫລືມາເປັນຂອງເຮົາແຕ່ພຽງຜູ່ດຽວ
ແຕ່ໃນຄວາມອີ່ມອາບໃຈທີ່ວ່າ ເຮົາເກີດມາຍັງມີຄົນທີ່ເຮົາຮັກ
ແລະທີ່ຊ່ອຍເຮັດໃຫ້ຫູຕາເຮົາແຈ້ງສວ່າງຂຶ້ນຕື່ມອີກ ດ້ວຍຄວາມຕະຫນັກດັ່ງກ່າວ
ນາງບອກຕົນເອງວ່າ ນາງຈະບໍ່ຍອມທໍ້ແທ້ຕໍ່ກັບທຸກອຸປສັກໃດໆທີ່ມາຂວາງຫນ້າ
ເພາະນາງມີຄົນຮັກທີ່ຊີວິດນີ້ນາງຮັກຍິ່ງ

ວອນວິໄລປະໃຫ້ອິສຣະວາງແນບມືຂອງນາງໄວ້ທີ່ແກ້ມຂອງເຂົາຕໍ່ໄປ ຕາບນານເທົ່ານານ...



## ໗. ມື້ໄຂໂຮງຮຽນ

ຕັ້ງແຕ່ເຊົ້າມາ ຜູ່ຄົນກໍທະຍອຍກັນມາຮ່ວມພິທີ່ໄຂໂຮງຮຽນ
ຊຶ່ງເກີດຂຶ້ນມາຈາກນໍ້າຈິດນໍ້າໃຈແລະເຫື່ອແຮງຂອງຫລາຍໆຄົນນັ້ນ
ວອນວິໄລເກືອບວ່າຈະຈື່ໜ້າພໍ້ຕາກັບຄົນທີ່ມາຮ່ວມເປັນສ່ວນຫລາຍ
ຈາກພວກລູກສິດລູກຫາວັດທີ່ອິສຣະສອນໜັງສືໃຫ້ລ້າໆ
ເຖິງພວກລູກສິດລູກຫາໂຮງຮຽນຈ້າງເອກຊົນທີ່ມີມິຖືກັນທຸກຄົນ
ແລະຈາກຄົນທີ່ນາງຮູ້ຈັກຄຸ້ນເຄີຍທີ່ມາຊ່ອຍວຽກການປຸກສ້າງໂຮງຮຽນເປັນປະຈໍາ
ຈົນເຖິງແຂກຜູ່ໃຫຍ່ໄມ້ສູງທີ່ມາກັນເພື່ອເພີ້ມຣັສມີຂອງຕົນຂຶ້ນນັ້ນ
ນາງຍັງເຫັນພໍ່ແມ່ແລະນ້ອງສາວຂອງນາງມາເຂົ້າຮ່ວມ ເພາະສໍາຫລັບຜູ່ບັງເກີດເກົ້າຂອງນາງແລ້ວ
ໂຮງຮຽນຫລັງໃຫມ່ນີ້ກໍຄືການສູ້ຊົນຢ່າງບໍ່ທຍໍ້ທໍ້ຂອງຊີວິດທີ່ຕ່າງກໍເກີດມາເພື່ອຊີວິດທີ່ດີຂຶ້ນ
ທີ່ມີສັກສີ ແລະກໍທີ່ມີຫວັງໃນຄຸນງາມຄວາມດີນັ້ນ

ນອກນັ້ນ ຜູ່ທີ່ເຂົ້າຮ່ວມກໍຍັງມີເພື່ອນໆຂອງອິສຣະທີ່ຕັ້ງຂະໂຍງກັນມາແຕ່ຕ່າງປະເທດ
ເພື່ອງານນີ້ໂດຍສະເພາະ ແນ່ນອນວ່າໃນນັ້ນກໍມີບຸນມີຜູ່ທີ່ເປັນກໍາລັງແຮງຫລັກ
ເພື່ອຫາກ້ອນເງິນທືນມາປຸກສ້າງໂຮງຮຽນນັ້ນ ວອນວິໄລຮູ້ວ່າ
ງານນີ້ຄົງຈະບໍ່ຄົບສົມບູນຫາກຂາດໃຜຄົນນຶ່ງ
ຜູ່ຊຶ່ງຖ້າຈະປຽບກໍເຫມືອນດັ່ງເປັນຄູ່ແຂ່ງຂອງນາງໃນດ້ານຂອງຄວາມຮັກ
ຫວ່າງມື້ກ່ອນນີ້ກໍໄດ້ຍິນບຸນມີວ່າ ວຽງປະພາຈະພະຍາຍາມມາໃຫ້ທັນການໄຂໂຮງຮຽນໃນຄັ້ງນີ້
ແຕ່ຈົນແລ້ວຈົນລອດ ວອນວິໄລກໍຄືບໍ່ເຫັນຍິງໃນດວງໃຈຂອງອິສຣະມາກ່ອນ
ຢູ່ໃນຜູ່ມາຮ່ວມງານນີ້ເທື່ອ



“ວອນ ຊອກຫາຢູ່ຈົນເມື່ອຍ ກະມາລີ້ຢູ່ນີ້ນໍ” ສຽງຈາກຂ້າງໆດັງຂຶ້ນ ບຸນມີນັ້ນເອງ
“ນ້ອງກໍກຳລັງຄິດຮອດອ້າຍຢູ່ ດີໃຈແທ້ໆທີ່ໄດ້ເຫັນຫນ້າອ້າຍອີກ”
ວອນວິໄລກ່າວອອກໄປດ້ວຍໃຈຈິງ ເພາະຕັ້ງແຕ່ບຸນມີມາເມືອງລາວອີກຄັ້ງ
ອິສຣະກໍຄືມີຊີວິດຂຶ້ນຕື່ມ ຊຶ່ງນັ້ນບໍ່ແມ່ນວ່າ ເຂົາຈະບໍ່ມີຊີວິດຊີວາຕອນບໍ່ມີເພື່ອນຄູ່ຫູນັ້ນ
ແຕ່ມັນເປັນຄວາມມີຊີວິດຊີວາທີ່ນາງສັງເກດຕາມປະສາຜູ່ຍິງວ່າ ມັນຢູ່ໃນອີກລະດັບນຶ່ງຕ່າງຫາກ
“ອິສຣະບອກວ່າ ນີ້ກໍໃກ້ຈະຮອດເວລາໄຂພິທີແລ້ວ ຫມໍກໍເລີຍຊອກຫານ້ອງເປັນການໃຫຍ່”
ບຸນມີຜູ່ຊຶ່ງມີຄວາມສນິດສນົມອັນເປັນທັມມະຊາດຂອງເຂົາຕໍ່ກັບທຸກຄົນກ່າວຂຶ້ນ
ແຕ່ພິເສດແລ້ວກໍແມ່ນວ່າ ເຖິງເຂົາຈະບໍ່ໄດ້ໃກ້ຊິດກັບວອນວິໄລປານໃດ ເຂົາກໍຕ້ອງຍອມຮັບວ່າ
ເຂົາເຂົ້າກັບນາງໄດ້ດີກ່ວາຜູ່ອື່ນໆ ດັ່ງນັ້ນເຂົາເອີ້ນນາງພຽງສັ້ນໆວ່າ “ວອນ ແທນທີ່ຈະເປັນ
“ວອນວິໄລ” ດັ່ງຄົນທີ່ບໍ່ຄຸ້ນເຄີຍພາກັນເອີ້ນຂານນາງ



“ແລ້ວບໍ່ລໍຖ້າໃຫ້ເອື້ອຍວຽງປະພາມາຮອດກ່ອນບໍ່?”
ວອນວິໄລກ່າວອອກໄປຢ່າງເຂົ້າໃຈ
ເພາະກໍດັ່ງທີ່ຮູ້ທຸກຄົນແມ່ນຕັ້ງຫນ້າລໍຖ້າການມາປະກົດຕົວຂອງວຽງ
ປະພາ ຊຶ່ງຕາມບຸນມີວ່າ ຈະມາຮອດມາເຖິງໃນເຊົ້າມື້ນີ້
“ອ້າຍຫາກໍວາງສາຍກັບວຽງປະພາມາມື້ກີ້ນີ້ ລາວບອກວ່າ
ລາວປ່ຽນໃຈບໍ່ມາເພາະຄາວຽກຫລາຍ” ສຽງຂອງບຸນມີດັ່ງຂຶ້ນ
ພ້ອມກັບການຫຍັບຕົວນຳຫນ້າພານາງໄປສູ່ແຖວຫນ້າຂອງບ່ອນຈັດ

ງານ ຂະນະທີ່ຕາມຫລັງບຸນມີໄປນັ້ນ ວອນວິໄລກໍອົດຄິດເຖິງຫົວອົກຂອງວຽງປະພາບໍ່ໄດ້ ຍອດຍິງຂອງອິສຣະຄົນນີ້ຊ່າງເປັນແມ່ພຣະ ສົມກັບທີ່ຄົນດີໆຢ່າງອິສຣະບໍ່ອາດລືມໄດ້ຢ່າງງ່າຍໆ ນາງຮູ້ດີວ່າ ເຫດທີ່ວຽງປະພາບໍ່ຍອມມາ ຕ້ອງບໍ່ແມ່ນຄາວຽກຄາການ ແຕ່ຕ້ອງແມ່ນເຫດອື່ນທີ່ຈະມີກໍພຽງແຕ່ວຽງປະພາແລະອິສຣະຜູ່ກ່ຽວຂ້ອງໂດຍກົງເທົ່ານັ້ນຈະເຂົ້າໃຈໄດ້ ວອນວິໄລໄດ້ແຕ່ບອກຕົນເອງວ່າ ນາງຈະຖນອມຮັກສາອິສຣະໃຫ້ສເມີດ້ານ ດັ່ງທີ່ວຽງປະພາເຄີຍມີໃຫ້ເຂົາ ແລະກໍຄົງຈະມີຕລອດໄປ...



-----------------------------------------------------------------------

"ຂໍເຊີນທ່ານອິສຣະ ອະນຸວົງ ຜູ່ເປັນປະທານຂອງງານນີ້ ຂຶ້ນມາກ່າວພິທີໄຂໂຮງຮຽນເລີຍ" ສຽງຂອງໂຄສົກດັງຂຶ້ນ ພ້ອມກັບສຽງຕົບມືແລະວິດສຽງຂອງຜູ່ຄົນທີ່ມາເຂົ້າຮ່ວມ ໂດຍສະເພາະກໍແມ່ນພວກລູກສິດລູກຫາຂອງເຂົາທັງຫລາຍ ທີ່ຮູ້ສຶກວ່າຈະມີຢູ່ກັນໃນທຸກຈອກທຸກແຈຂອງງານ ອິສຣະດ້ວຍທ່າທີສຳລວມກ້າວຂາຂຶ້ນສູ່ເວທີ ບ່ອນທີ່ມີໄມກະໂຣໂຟນວາງໄວ້ ວອນວິໄລເກືອບວ່າ ຈະບໍ່ໄດ້ຍິນຖ້ອຍຄຳຂອງເຂົາຢ່າງເປັນວັກເປັນຕອນ ເພາະນາງໄດ້ແຕ່ຊື່ນຊົມໃນຄວາມເອກອ້າງທີ່ສໍ່ແວວອອກໃນທຸກສິ່ງທີ່ເຂົາຈັບຕ້ອງ ໂອ້ອິສຣະ ຂ້ອຍຮັກເຈົ້າຫລາຍເກີນກ່ວາວາຈິນີ້ຈະເອື້ອນເອີຍອອກມາໄດ້

*ໃນຫ້ວງນຶກຂອງວອນວິໄລນັ້ນເຕັມໄປດ້ວຍສີສັນແຫ່ງຄວາມດີງາມທີ່ບາງຄັ້ງນາງກໍຄິດວ່າ ນາງບໍ່ສົມຄວນທີ່ຈະໄດ້ຮັບສິ່ງນັ້ນເລີຍ ຫລືວ່ານີ້ເປັນພຽງຄວາມຝັນທີ່ພໍຕື່ນມືນຕາ*

*ກໍມະລາຍຫາຍໄປດັ່ງນ້ຳຄ້າງຖືກຕ້ອງກັບແສງຕາເວັນ  ນາງບອກຕົນເອງວ່າ*
*ຄວາມຝັນນີ້ບໍ່ພຽງແຕ່ເຮັດໃຫ້ນາງຊຶ້ງໃນຕົວຂອງຊາຍຄົນຮັກ  ແຕ່ມັນຍັງເຮັດໃຫ້ນາງ*
*ຮູ້ໃນຄວາມຈິງຂໍ້ນຶ່ງໃຫມ່ທີ່ວ່າ ນີ້ຄືສັງຄົມໃຫມ່ທີ່ນາງເຄີຍໄດ້ຍິນແຕ່ຫາກບໍ່ເຫັນເປັນຈິງ*
*ຢູ່ໃສມາກ່ອນຈັກເທື່ອ  ອຸດົມການແລະການເສັຽສລະນີ້ສາມາດເຮັດໃຫ້ຄົນເຮົາຫລຽວເບິ່ງຕົນເອງ*
*ຢ່າງສົມພາກພູມ  ດັ່ງທີ່ຜູ່ຄົນທີ່ມາຮ່ວມໃນງານນີ້ເປັນຈຳນວນຫລວງຫລາຍໄດ້ທຳກັນ*
*ແລ້ວນີ້ຈະບໍ່ໃຫ້ນາງຝັນເພີ້ແລະນ້ຳຕາຊື່ມເບົ້າໄດ້ຢ່າງໃດກັນ?*

"ມາໃນທີ່ນີ້  ຂ້າພະເຈົ້າຂໍຂອບໃຈອີກຄັ້ງໃນນ້ຳໃຈອັນປະເສີດຂອງທຸກໆທ່ານ
ທີ່ມີສ່ວນໃນການປຸກສ້າງໂຮງຮຽນຫລັງນີ້ຂຶ້ນມາ
ການເສັຽສລະຂອງພວກທ່ານບໍ່ວ່າທັງເງິນທອງແລະເຫື່ອແຮງນັ້ນ
ຈະບໍ່ມີວັນຖືກຫລົງລືມໄປໄດ້ງ່າຍໆ  ຈາກປະຊາຊົນໃນຂົງເຂດນີ້  ແລະກໍຈາກຂ້າພະເຈົ້າຄົນນີ້"
ວອນວິໄລໄດ້ຍິນນ້ຳສຽງຂອງອິສຣະທີ່ປຽບດັ່ງສຽງເພງທີ່ມີລຳນຳອັນມ່ວນຫູດຳເນີນໄປເລື້ອຍໆ
ແຕ່ທັນທີທີ່ເຂົາກ່າວຢ້ຳເຖິງຕົວເຂົາເອງ  ນາງກໍເຫັນເຂົາຢຸດຊື້ງໄປບາດນຶ່ງ
ແລະໃນດວງຕາຂອງເຂົາເຫມືອນຈະມີນ້ຳໃສຫລໍ່ລ້ຽງ
ສົ່ງໄປໃຫ້ໃຜຄົນນຶ່ງທີ່ບໍ່ອາດມາຮ່ວມງານຄັ້ງສຳຄັນທີ່ນາງມີສ່ວນຮ່ວມສ້າງນຳດ້ວຍ...ວຽງປະພາ



## ໑໐. ໂລກນີ້ຍັງກ້ວາງໃຫຍ່ໄພສານ



ນະທີ່ຟາກຟ້າແດນໄກ ວຽງປະພານັ່ງອ່ານຈົດຫມາຍທີ່ທາງເມືອງລາວຊຽນຫາ
ນາງນັ້ນບໍ່ເຄີຍຄິດຄາດຝັນວ່າ ຊາຍທີ່ນາງຕັ້ງໃຈວ່າຈະລືມເຂົາໃຫ້ໄດ້ນັ້ນ
ຈະຍັງຄົງມີນາງຊ່ອນເຮັ້ນຢູ່ໃນທຸກຖ້ອຍຄຳທີ່ນາງໄດ້ອ່ານ ມາວັນນີ້
ວັນທີ່ໂຮງຮຽນທີ່ນາງມີສ່ວນນຶ່ງຊ່ອຍປູກສ້າງກຳລັງຈະໄຂຂຶ້ນ
ນາງອົດນຶກຫ່ວນຍ່ອນໄປເຖິງຄັ້ງທີ່ຍັງມີເຂົາຢູ່ນຳບໍ່ໄດ້ ມັນເປັນໄດ້ບໍ່
ທີ່ວ່າຮັກນີ້ຈະເສື່ອມສລາຍໄປກັບກາລເວລາ?  ຫລືມັນຈະເປັນດັ່ງກະວີທີ່ເຂົາຊຽນໃຫ້ນາງ
ກ່ອນທີ່ຈະອຳລາໄປຈາກນາງຕາບທົ່ວເທົ່າໃດໆ  ບົດກະວີນັ້ນຊຽນວ່າ

## ເຈົ້າ...  ຄວາມຮັກ...  ເມັດຊາຍ

ເຈົ້າເປັນຄວາມຊົງຈຳ

ທີ່ບໍ່ມີວັນສິ້ນສຸດຂອງຂ້ອຍ

ຫາກຈະປຽບ

ຄວາມຮັກທີ່ຂ້ອຍມີຕໍ່ເຈົ້າ

ກໍບໍ່ຕ່າງຫຍັງກັບເມັດຊາຍ

ມັນມາກມາຍກ່າຍກອງ

ເກີນກ່ວາຈະຄະນານັບໄດ້

ຫລາຍເທື່ອ

ຄື້ນຟອງຖາຖົມເຂົ້າໃສ່

ເມັດຊາຍຈຳນວນບໍ່ຫນ້ອຍ

ຫາຍໄປກັບຄື້ນຟອງນັ້ນ

ແຕ່ຄືນແລ້ວຄືນເລົ່າ

ວັນແລ້ວວັນເລົ່າ

ເມັດຊາຍທີ່ເຫລືອຄ້າງ

ກໍຍັງຄະນານັບບໍ່ໄດ້

ແລະມັນຈະເປັນເຊັ່ນນີ້

ຊົ່ວນິດນິຣັນດອນ

ເຖິງວ່າ

ຮ່າງຄິງຈະແຕກດັບ

ໄປກັບກາລເວລາກໍຕາມ

ເຈົ້າ...ຄວາມຮັກ

...ເມັດຊາຍ

ທັງຫມົດປະກອບກັນເປັນຂ້ອຍ

ແລະເມື່ອຂາດສິ່ງໃດສິ່ງນຶ່ງ

ຄວາມເປັນຂ້ອຍກໍຈະຂາດຫາຍໄປ

ຈະເຫລືອໄວ້ກໍພຽງຄວາມຊົງຈໍາ

ທີ່ເຈັບປວດເລິກໆໃນດວງໃຈ

ເທົ່ານັ້ນເອງ

ວຽງປະພາບອກຕົນເອງວ່າ ມັນຄົງຈະເປັນການຍາກທີ່ນາງຈະຫລົງລືມ ຫລືຖອດຖອນພາບຂອງເຂົາອອກໄປຈາກດວງຈິດຂອງນາງໄດ້ ແຕ່ໃນຂະນະດຽວກັນ ນາງກໍລະນຶກສເມີວ່າ ນີ້ຄືທາງອອກທີ່ດີ ທີ່ນາງມີໄວ້ໃຫ້ແກ່ຄົນທີ່ນາງຮັກຍິ່ງ ຊຶ່ງກໍບໍ່ຕ່າງຫຍັງກັບຄໍາເວົ້າຂອງຕົວລະຄອນຕົວນຶ່ງທີ່ເອີຍອອກໄປວ່າ *ຂ້ອຍຕາຍໂດຍປາສຈາກຄົນທີ່ຮັກຂ້ອຍ ແຕ່ຂ້ອຍກໍອີ່ມໃຈທີ່ຂ້ອຍຍັງມີຄົນທີ່ຂ້ອຍຮັກຢູ່*

ແລະພາຍໃຕ້ຄວາມມືດມິດຂອງຂ່ອນຄືນນັ້ນ ດວງຕາອັນແນ່ວແນ່ທັງສອງຄູ່ຂອງນາງກໍແນມໄປເບິ່ງກອບແກ້ວອັນມີບົດກະວີຂອງເຂົາ ຊຶ່ງຕລອດມາເປັນຄວາມຫວັງ ແລະເປັນກໍາລັງໃຈໃຫ້ນາງໄດ້ສູ້ຊົນກັບຊີວິດຢ່າງບໍ່ມີວັນຮູ້ຍໍ້ທໍ້ ໂດຍສະເພາະກໍຕອນທີ່ວ່າ

ເມື່ອຟ້າຝົນລົມແດງຜ່ານໄປ

ຄວາມຫວານຊື່ນກໍຕິດຕາມມາ

ພ້ອມກັບໃບໄມ້ຫລົ່ນໃບສຸດທ້າຍ...



ແມ່ພາຜູ່ຊຶ່ງຈະເຂົ້າມາເບິ່ງວ່າ ລູກນອນແລ້ວບໍ່? ເພາະນີ້ກໍເດິກຫລາຍແລ້ວ
ແຕ່ໄຟນ້ອຍເທິງໂຕະຂ້າງຕຽງລູກຍັງຄົງສ່ອງແສງພໍເປັນມົວໆຢູ່
ເມື່ອແມ່ແນມເຫັນລູກຈົມໄປກັບຄວາມນຶກຝັນໂດຍມີຈົດຫມາຍຖືຢູ່ໃນມື ແມ່ກໍຮູ້ວ່າ
ລູກຂອງແມ່ກຳລັງຮ້ອງໄຫ້ຢູ່ໃນຫົວໃຈ
ຄົນທີ່ລູກຮັກນັ້ນປຽບຄືດັ່ງສາຍນ້ຳທີ່ໄຫລລ່ອງໄປຢ່າງບໍ່ມີວັນຫ່ວນຢ່ອນຄືນມາອີກ
ທັງຫມົດນີ້ຈະເຫລືອໄວ້ກໍຊຶ່ງຄວາມດີງາມທີ່ຄັ້ງນຶ່ງເຄີຍມີໃຫ້ກັນເທົ່ານັ້ນ  ແມ່ຮູ້ວ່າ
ຄົງຈະດົນກ່ວາລູກຂອງແມ່ຈະລືມອິສຣະໄດ້  ຫລືເຂົາອາດຈະຝັງແຫນ້ນຢູ່ໃນດວງໃຈລູກ
ຢ່າງບໍ່ມີຜູ່ໃດອາດມາທົດແທນໄດ້ໃນຊົ່ວຊີວິດນີ້ເລີຍ



ແມ່ພາສອດສາຍຕາກວດໄປເບິ່ງທົ່ວຫ້ອງນອນຂອງລູກສາວ
ຊຶ່ງຝາແຕ່ລະເບື້ອງເຕັມໄປດ້ວຍຮູບຂອງໂຮງຮຽນຫລັງໃຫມ່  ຂອງຜູ່ຄົນທີ່ມາຊ່ອຍສ້າງ
ແລະກໍຂອງເດັກນ້ອຍນັກຮຽນທີ່ຕ່າງກໍມາຈ້ອງມອງດ້ວຍດວງຕາທີ່ໃສເປັນແປ໋ວແວ໋ວ
ໃນອີກພາບນຶ່ງນັ້ນ  ມີອິສຣະກຳລັງມຸງຫລັງຄາໂຮງຮຽນໂດຍມີຍິງສາວຄົນນຶ່ງທີ່ຄ້າຍຄືລູກ

ກຳລັງຖືຜ້າເຊັດຫນ້າຜືນນ້ອຍຈ້ອງມອງໄປຫາ ຫາກເປັນເມື່ອກ່ອນແມ່ກໍຄົງຈະຄິດວ່າ ລູກຈົມຢູ່ໃນອະດີດ ຝັງຕົວຢູ່ໃນຄວາມຫລັງ ແຕ່ມາວັນນີ້ແມ່ຕະຫນັກວ່າ ລູກຂອງແມ່ເຂັ້ມແຂງຂຶ້ນ ເຂົ້າໃຈໂລກຫລາຍຂຶ້ນ ສອງຫນ່ວຍຕາຂອງລູກທີ່ຈ້ອງມອງໄປຂ້າງຫນ້າບອກແມ່ວ່າ ໂລກນີ້ຍັງກ້ວາງໃຫຍ່ໄພສານ ລູກຈະສ້າງໂລກນີ້ໃຫ້ສວຍສົດງົດງາມໄປກ່ວາຫນ່ວຍໂລກ ອຸດົມການທີ່ອິສຣະສ້າງຂຶ້ນມານັ້ນ ແລະແມ່ເອງກໍແນ່ໃຈວ່າ ລູກຈະເຮັດໄດ້ ເພາະລູກຄືເພັດນ້ຳນຶ່ງທີ່ຈະຫາຢູ່ໃສບໍ່ໄດ້ອີກແລ້ວ



ຫິມະໂປຍລົງມາຢູ່ຂ້າງນອກຂາວຈຸ່ມຜຸ່ມ ອາກາດຊ່າງຫນາວເຢັນ
ແຕ່ມາວັນນີ້ແມ່ບໍ່ສົງໃສຫຍັງອີກຕໍ່ໄປແລ້ວວ່າ
ອີກບໍ່ດົນຫິມະກໍຈະເຊົາໂປຍລົງມາ
ຈາກນັ້ນລະດູໃບໄມ້ປົ່ງກໍຈະຕິດຕາມມາ ຊຶ່ງນັ້ນກໍຫມາຍຄວາມວ່າ
ດອກໄມ້ຈະບານ ໃບໄມ້ຈະເຕັມຂຽວເຕັມຕົ້ນ
ແລະນົກນ້ອຍຈະຂັບຂານຕ້ອນຮັບຕະເວັນໃນວັນໃຫມ່
ວັນທີ່ໂລກຈະແຈ່ມໃສໄຮ້ຄວາມເສົ້າໂສກຫມົ່ນຫມອງ
ແລະເຕັມໄປດ້ວຍຄວາມຫວັງອັນບໍ່ມີວັນຮູ້ຈືດຈາງ
ແລະເສື່ອມສລາຍໄປກັບກາລເວລານີ້

ຈົບບໍຣິບູນ

ທັນວາ ໒໐໐໖

